# 占芭 ຈຳປາ



## ງານກິລາໂອລິມປິກຄັ້ງທີ 29ຈັດພິທີຢ່າງສຳເລັດທີ່ປັກກິ່ງ

ຂັ້ນເລງບິດເພງດັງຂຶ້ນຍິ່ງໄວຍິ່ງສູງຍິ່ງແຮງ

ແຕ້ມຮູບພາບແຫ່ງຄວາມສາມັກຄີມິດຕະພາບສັນຕິພາບ

## ນັກກິລາລາວທີ່ຮ່ວມພາສາຈີນຢູ່ໃນໝູ່ບ້ານງານໂອລິມປິກ

## ລາຍຊື່ນັກກິລາຂອງຄະນະຜູ້ແທນກິລາຈີນທີ່ໄດ້ຮັບຫຼຽນຄຳ


ລາຄາ: 13000 ກີບ ¥10

ISSN 1673-3266

09/2008

ສະບັບທີ 37



MEKONG An Authoritative Magazine in Thai
AUSPICIOUS An Authoritative Magazine in Burmanese
CHAMPA An Authoritative Magazine in Lao
Preferential Activity for Advertisement
Provided by the Three Publications
Foreign Media Overbalance Investment Overal Agent Lower Price
湄公河
แม่น้ำโขง
12/2006 เล่มที่ 55
吉祥
占芭
Same Investment Different Return
In order to thank old & new customers for their kindness in giving
MEKONG, AUSPICIOUS & CHAMPA support for a long
time, " The Three Publications " Golden Combination Suit
advertisement has been specially worked out for customers.
Please contact the general agent for detailed information:
CHAMPA Magazine
Add:Education Garden,Extensionline of Xihua Road,
Kunming,Yunnan, China
Tel:86-871-8042593 Fax:86-871-8042591
E-meil:ynzhanba@163.com
http://la.yunnan.cn http://laos.cri.cn http://www.scio.gov.cn

# ແຈ້ງການ

### ກ່ຽວກັບການເຄື່ອນໄຫວ "ຈັດງານປະກວດຮ້ອງ ເພງຈີນ"

ເພື່ອປະສານສົມທົບການຮຽນພາສາຈີນຂອງຜູ້ອ່ານວາ ລະສານ "ຈຳປາ" (ຈີນ) ແລະ ເພື່ອນມິດຊາວລາວຈຳນວນຫລວງ ຫລາຍໃຫ້ໄດ້ຮັບຜົນດີກວ່າເກົ່າ, ສະຖານເອກອັກຄະລັດຖະທູດຈີນ ປະຈຳລາວ ແລະສຳນັກງານວາລະສານ "ຈຳປາ" (ຈີນ) ຮ່ວມ ກັນເປັນເຈົ້າພາບຈັດໃຫ້ມີການເຄື່ອນໄຫວ "ງານປະກວດຮ້ອງ ເພງ ຈີນ" ຂຶ້ນ, ຈຶ່ງຂໍແຈ້ງການມາຍັງທ່ານຜູ້ອ່ານທັງຫລາຍດັ່ງຕໍ່ ໄປນີ້:

1.ເປົ້າໝາຍຂອງຜູ້ເຂົ້າຮ່ວມງານປະກວດ: ຜູ້ອ່ານວາລະສານ "ຈຳປາ" (ຈີນ), ຜູ້ທີ່ພວມຮຽນພາສາຈີນ ຢູ່ລາວ, ນັກຮຽນນັກສຶກສາ, ຊາວລາວຜູ້ມັກຮ້ອງເພງຈີນ, ຈີນ ຕ່າງດ້າວແລະ ຊາວລາວທີ່ມີເຊື້ອສາຍຈີນ.

2. ຫົວໜ່ວຍທີ່ຮັບການຈັດງານປະກວດ: ສະມາຄົມຈີນນະຄອນຫລວງວຽງຈັນ.

3.ເພງທີ່ເຂົ້າຮ່ວມການປະກວດ: ໂດຍເອົາຊື່ເພງໃນ ຄໍລຳ "ຮຽນຮ້ອງເພງຈີນ" ໃນເວັບໄຊ "ຈຳປາ" (ຈີນ) ແລະ ເພງໃນແຜ່ນສຽງທີ່ສຳນັກງານວາລະສານ "ຈຳປາ" ແຈກຢາຍນັ້ນເປັນຫລັກ.

4.ການຈັດຕັ້ງການປະກວດຮອບທຳອິດ ແລະ ຮອບຄັດເລືອກພ້ອມທັງສະຖານທີ່ຂອງການປະກວດໃຫ້ແຕ່ລະພາກສ່ວນ, ແຕ່ລະຫົວໜ່ວຍແລະແຕ່ລະທ້ອງຖິ່ນຮັບຜິດຊອບເອງ, ປະກວດເອົາຜູ້ເຂົ້າຮ່ວມການແຂ່ງຂັນຮ້ອງເພງໃນຮອບຄັດ ເລືອກ 30 ຄົນເພື່ອເຂົ້າຮ່ວມການປະກວດຊີງຊະນະເລີດ.

5.ເວລາປະກວດຊີງຊະນະເລີດ: ກາງເດືອນທັນວາ ປີ2008.

6.ສະຖານທີ່ປະກວດຊີງຊະນະເລີດ: ຫໍວັດທະນະທຳ ແຫ່ງຊາດທີ່ນະຄອນຫລວງວຽງຈັນ ສປປ ລາວ.

7.ມາດຕະຖານຂອງການໃຫ້ຄະແນນະອອກສຽງສຳ ນຽງຊັດ, ອອກສຽງໄດ້ມາດຕະຖານ, ອາລົມຈິດທີ່ສະແດງອອກ ສວຍງາມ, ວາດຊົງຢູ່ເທິງເວທີສະຫງ່າ.

8.ງານປະກວດຊີງຊະນະເລີດໂດຍແມ່ນສະຖານເອກອັກຄະລັດຖະທູດຈີນປະຈຳລາວ, ສຳນັກງານວາລະສານ "ຈຳປາ" (ຈີນ)ແລະ ຫົວໜ່ວຍຮັບຈັດງານປະກວດຮ່ວມກັນຈັດຕັ້ງຂຶ້ນ.

ຜ່ານການປະກວດຊີງຊະນະເລີດແລ້ວ, ສຸດ ທ້າຍປະກວດອອກຜູ້ໄດ້ລາງວັນ ທີ 1: 5 ຄົນ, ລາງວັນທີ 2: 10 ຄົນ ແລະ ລາງວັນທີ 3: 15 ຄົນ.ເງິນລາງວັນທີ 1: 500 ຢວນ, ລາງວັນທີ 2: 300 ຢວນ, ລາງວັນທີ 3: 200 ຢວນ.ຜູ້ທີ່ເຂົ້າຮ່ວມການປະກວດຊີງຊະນະເລີດທັງໝົດລ້ວນແຕ່ໄດ້ຂອງລະນຶກ 1 ອັນ. ໃນນັ້ນ, ຜູ້ທີ່ໄດ້ລາງວັນທີ 1 ຈະຖືກສຳນັກພິມວາລະສານ "ຈຳປາ" ເຊື້ອເຊີນເດີນທາງໄປທັດສະນະສຶກສາ ແລະ ທ່ຽວຊົມທີ່ຄຸນມິງ ແລະ ແຫ່ງອື່ນໆຂອງຈີນ, ຄ່າໃຊ້ຈ່າຍແມ່ນສຳນັກງານວາລະສານ "ຈຳປາ" (ຈີນ)ເປັນຜູ້ຮັບຜິດຊອບ, ຈຶ່ງແຈ້ງການມາເພື່ອຊາບ.

ໂທລະສັບຫາບທານ: 0086-871-8042591 ຜູ້ຕິດຕໍ່ພົວພັນ: ຊູເອີນເອີນ

00856-21-214661 ຜູ້ຕິດຕໍ່ພົວພັນ: ເພີງເຈີ້ນຮົວ

ວັນທີ່ 18 ມິຖຸນາ ປີ 2008

ສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ

ສຳນັກງານວາລະສານ "ຈຳປາ" ພາສາລາວ ແຫ່ງປະເທດຈີນ.

### 关于举办"学唱中文歌曲大赛"活动

## 公　告

为了更好地配合中国·《占芭》杂志读者和广大老挝朋友学习汉语，中国驻老挝大使馆、中国·《占芭》杂志社联合主办"学唱中文歌曲大赛"活动，现公告如下：

1. 参赛对象 ：中国·《占芭》杂志读者，老挝正在学习中文人员，青年学生，老挝中文歌曲爱好者，华人华侨。

2. 承办单位 ：老挝万象中华理事会。

3. 参赛歌曲 :以中国·《占芭》网站"学唱中文歌曲"栏目中歌曲及杂志社发放的光盘歌曲为主要参赛曲目。

4. 初赛、复赛组织及地点由各系统、各单位、各地区负责，复赛后共选出 30 名选手参加决赛。

5. 决赛时间 ：2008 年 12 月中旬。

6. 决赛地点 ：老挝万象国家文化宫。

7. 评分标准 ：吐字清楚、发音准确，表情优美、台风庄重。

8. 决赛由中国驻老挝大使馆，中国·《占芭》杂志社，及承办单位共同组织。

通过大赛，最后决出一等奖 5 名，二等奖 10 名，三等奖 15 名。一等奖奖金人民币 500 元 ；二等奖奖金人民币 300 元 ；三等奖奖金人民币 200 元。凡参加决赛者均获纪念品一份。其中，一等奖获得者由中国·《占芭》杂志社邀请前往中国昆明等地观光考察，费用由《占芭》杂志社承担。

联系电话 ：0086—0871—8042591　联系人 ：苏雯雯

00856—21— 214661　联系人 ：彭正华

中国驻老挝大使馆

中国 · 老挝文《占芭》杂志社

2008年7月

# ສາລະບານ

09/2008 ສະບັບທີ 37


ເຈົ້າໜ້າທີ່ຄຸ້ມຄອງໂດຍ
ຫ້ອງການຂ່າວຄະນະລັດຖະບານສ ປຈີນ
ຈັດທຳໂດຍ
ສະມາຄົມແລກປ່ຽນວັດທະນະທຳກັບຕ່າງ
ປະເທດແຂວງຢູນນານສ ປຈີນ
ຮຽບຮຽງພິມຈຳໜ່າຍ
ສຳນັກພິມວາລະສານ 《ຈຳປາ》
ຫົວໜ້າບັນນາທິການ
ໄຊຊຸນແຊງ
ຫົວໜ້າບັນນາທິການບໍລິຫານ
ຢາງຢູນ
ຫົວໜ້າພິມຈຳໜ່າຍ
ຢູຍເຈີງຢູຍ
ຜູ້ຄຸ້ມງານບັນນາທິການ
ຫວາງວັນລີ
ບັນນາທິການປະຈຳ
ຊູເວີນເວີນ
ຜູ້ຄຸ້ມງານຝ່າຍສີລະປະ
ຈູ້ສີນ
ຜູ້ແປພາສາລາວ
ທອງຂຽນ ຂຳຕະກຸນ
ບັນນາທິການອ່ານກວດ ພາສາລາວ
ລີວເຢີນເຫີ
ຜູ້ພິມດີດພາສາລາວ
ປາຍຢຽນ
ຜູ້ຄຸ້ມງານຝ່າຍອິນເຕີເນັດ
ຈາງເຊີຍີ
ບັນນາທິການຝ່າຍອິນເຕີເນັດ
ລີທາວ
ພະນັກງານຝ່າຍປົກຄອງ
ລູຢູຍ

ພິມຈຳໜ່າຍເປີດເຜີຍ:
ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ:
ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ:
ISSN 1673–3266
ລະຫັດວາລະສານປະເທດຈີນ:
CN53–1200/D
http://www.r ivermk.com
E–mail: ynzhanba@163.com

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

ສະຖານທີ່: ສວນດອກໄມ້ສຶກສາສາຍທາງຕໍ່ຖະ
ໜົນຊີຮວາ ນ.ຄ.ຄຸນໝິງ ຂວ.ຢູນນານ
ລະຫັດໄປສະນີ: 650228
ໂທ: 86-871-8042593
ແຟັກ: 86-871-8042591





ທ່ານເຟພຸໄດ້ຮັບຫຼຽນຄຳລອຍນ້ຳປະສົມ200ແມັດເພດຊາຍ
ທຳລາຍສະຖິຕິໂລກ

菲尔普斯打破男子200米个人混合泳世界纪录夺金
新华社 图


主　　管：中华人民共和国国务院新闻办公室
主　　办：云南省对外文化交流协会
编辑出版：《占芭》杂志社
总 编 辑：蔡春生
执行总编辑：杨　云
总编室主任：禹正玉
编辑总监：王万里
责任编辑：苏雯雯
美术总监：祝　群
翻　　译：通肯・坎达古温
老挝文译审：刘仁和
老挝文录入：白　艳
网络总监：张守义
网络编辑：李　涛
编　　务：陆　蕊

发行范围：国内外公开发行
出版日期：每月五日
邮发代号：64—36
国际标准刊号：ISSN 1673—3266
国内统一刊号：CN53—1200/D

广告经营许可证号 :5300004000052

地址：云南省昆明市西华路延长线 教育花园三楼
编辑部电话：86-871-8042593
办公室电话：86-871-8042591
传真：86-871-8042591
邮编：650228












## ສາລະຄະດີພິເສດ 本刊特稿

04 ບັນເລງປຶດເພງດັງຂຶ້ນຍິ່ງໄວຍິ່ງສູງຍິ່ງແຮງແຕ້ມຮູບພາບ
ແຫ່ງຄວາມສາມັກຄີມິດຕະພາບສັນຕິພາບ
ງານກິລາໂອລິມປິກຄັ້ງທີ 29ອັດພິທີຢ່າງສຳເລັດທີ່ປັກກິ່ງ



12 ທົ່ວທັງໂລກຍ້ອງຍໍສັນລະເສີນ "ອາລົມຈິດງານກິລາໂອລິມປິກຈີນ"



18 ງານມະຫາກຳກິລາໂອລິມປິກປັກກິ່ງໄດ້ເຮັດໃຫ້ຄວາມຝັນຂອງ
ຫລາຍຕໍ່ຫລາຍຄົນກາຍເປັນຄວາມຈິງ!



28 ເວທີໃຫຍ່ຂອງງານກິລາໂອລິມປິກ,ງານນິທັດສະການວັດທະ
ນະທຳ--ວັດທະນະທຳຈີນສະເທືອນກ້ອງໂລກາ




36 ຄະນະຜູ້ແທນລາວະງານກິລາໂອລິມປິກເປັນແວ່ນແຍງທີ່ດີຕໍ່ປະ
ເທດລາວ.



38 ນັກກິລາລາວທີ່ຮຽນພາສາຈີນຢູ່ໃນໝູ່ບ້ານງານໂອລິມປິກ



42 ການແຂ່ງຂັນຍິງປືນ,ຈີນໄດ້ 5 ຫລຽນຄຳ,ສ້າງສະຖິຕິອັນໃໝ່ໃນ
ປະຫວັດສາດ



44 ລົມພະຍຸຈາໄມກາ



46 ລາຍຊື່ນັກກິລາຂອງຄະນະຜູ້ແທນກິລາຈີນທີ່ໄດ້ຮັບຫຼຽນຄຳ



## ຮຽນພາສາຈີນ 学 汉 语

62 ເວົ້າເລື່ອງຄ້າຂາຍ




ທ່ານຫູຈິນທາວປະທານປະເທດສ ປ ຈີນໂບກມືສະແດງຄວາມຂໍານັບຕໍ່ນັກກິລາ, ຄູຝຶກແລະແຂກຜູ້ມີກຽດທີ່ມາຈາກຕ່າງປະເທດແລະເຂດແຄ້ວນຕ່າງໆ

中国国家主席胡锦涛向来自各国各地区的运动员、教练员和来宾挥手致意　新华社 图



# ງານກິລາໂອລິມປິກຄັ້ງ

## ບັນເລງບົດເພງດັງຂື້ນຍິ່ງ

## ແຕ້ມຮູບພາບແຫ່ງຄວາມ

## 奏响更快更高更强乐章

## 描绘团结友谊和平画卷

——第 29 届奥林匹克运动会在北京圆满闭幕

体坛盛会精彩闭幕，奥运圣火永存心中。第 29 届奥林匹克运动会闭幕式 8 月 24 日晚在中国国家体育场隆重举行，来自各国各地区的运动员、教练员和来宾在团结、欢乐、和谐的气氛中，共同庆祝北京奥运会取得圆满成功。



# ທີ 29 ອັດພິທີຢ່າງສຳເລັດທີ່ປັກກິ່ງ

## ໄອຢິ່ງສູງຍິ່ງແຮງ

## ສາມັກຄີມິດຕະພາບສັນຕິພາບ

ໄຟດອກທີ່ຍິງສົ່ງຂຶ້ນໃນພິທີປິດງານກິລາໂອລິມປິກ
闭幕式上燃放的焰火　新华社 图

ງານມະຫາກຳກິລາອັດພິທີຢ່າງມີໄຊ,ທອນໄຟງານກິລາໂອລິມປິກຈິ່ງໄວ້ຢູ່ໃນດວງໃຈຕະຫຼອກການ;ຕອນຄ່ຳວັນທີ24ເດືອນ8ຈັດພິທີອັດງານກິລາໂອລິມປິກຄັ້ງທີ29ທີ່ສະໜາມກິລາແຫ່ງຊາດຈີນຢ່າງຄຶກຄື້ນ. ນັກກິລາ,ຄູຝຶກແລະແຂກຜູ້ມີກຽດທີ່ມາຈາກບັນດາປະເທດແລະເຂດແຄ້ວນຕ່າງໆພ້ອມກັນສະເຫຼີມສະຫຼອງງານກິລາໂອລິມປິກປັກກິ່ງໄດ້ຮັບຜົນສຳເລັດເຕັມເມັດເຕັມໜ່ວຍ.

ຜູ້ນຳພັກແລະລັດຂອງຈີນມີທ່ານຫູຈິນທາວ,ຈຽງເຈີມິງ,ອູປາງກົວ,ເວິນເຈຍປາວ,ເຈຍຊິນລິນ,ລີຊາງຊຸນ,ສີຈິນຜິງ,ລີເຄີຊຽງ, ໂຈວຢົງຄັງ,ທ່ານຊາກຣົກເກປະທານຄະນະກຳມະການໂອລິມປິກສາກົນ,ທ່ານອັນໂຕນີຊາມານປະທານກິຕິມະສັກຕະຫຼອດຊີວິດຂອງງານກິລາໂອລິມປິກສາກົນແລະຜູ້ນຳແລະເຂດຜູ້ມີກຽດທີ່







ການສະແດງສິລະປະໃນພິທີປິດງານກິລາໂອລິມປິກ 闭幕式上的文艺表演 新华社 图



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກ 闭幕式上的文艺表演 吴贵荣 图



ການສະແດງສິລປະໃນພິທີປິດງານກິລາໂອລິມປິກ 闭幕式上的文艺表演 吴贵荣 图



ທ່ານຊາກຣົກເກປະທານຄະນະກຳມະການງານໂອລິມປິກສາກົນກ່າວຄຳປາໄສແລະ ປະກາດປິດງານກິລາໂອລິມປິກຄັ້ງນີ້ຢູ່ໃນພິທີປິດງານກິລາໂອລິມປິກ
国际奥委会主席罗格在闭幕式上致辞并宣布本届奥运会闭幕 新华社 图



ການສະແດງສິລປະໃນພິທີປິດງານກິລາໂອລິມປິກ
闭幕式上的文艺表演
新华社 图



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກ 闭幕式上的文艺表演 吴贵荣 图

ມາຈາກບັນດາປະເທດແລະເຂດແຄ້ວນຕ່າງໆໃນໂລກໄດ້ເຂົ້າຮ່ວມພິທີອັດງານກິລາໂອລິມປິກ.

ງານກິລາໂອລິມປິກປັກກິ່ງແມ່ນງານມະຫາກຳກິລາທີ່ສະຫງ່າລາສີໄວ້ຢູ່ໃນປະຫວັດສາດງານກິລາໂອລິມປິກ.ນັກກິລາ 10 ພັນກວ່າຄົນທີ່ມາຈາກ204ປະເທດແລະເຂດແຄ້ວນຕ່າງໆໄດ້ທ້າທາຍຂອບເຂດ,ປີນຈອມພູສູງ,ໄດ້ສ້າງສະຖິຕິໂລກອັນໃໝ່ 38 ລາຍແລະສະຖິຕິງານກິລາໂອລິມປິກ 85 ລາຍໃນ 16 ວັນທີ່ຜ່ານມານີ້,ມີຫຼາຍປະເທດສາມາດສ້າງຄວາມເປັນຈິງໃນການທັບເລກສູນແຕກຢູ່ໃນຕາຕະລາງຫຼຽນຄຳແລະຫຼຽນໄຊຂອງງານກິລາໂອລິມປິກປາກົດເປັນຈິງຂຽນບົດໃໝ່ທີ່ສວຍງາມແຫ່ງຄວາມສາມັກຄີ,ມິດຕະພາບແລະສັນຕິພາບ.ປະເທດຈີນທີ່ເປັນເຈົ້າພາບນັ້ນໄດ້ປະກອບສ່ວນຄວາມພະຍາຍາມອັນໃຫຍ່ຫຼວງທີ່ສຸດເຂົ້າງານກິລາໂອລິມປິກເພື່ອຈັດງານກິລາໂອລິມປິກທີ່ເປັນງານກິລາທີ່ມີລະດັບສູງແລະມີສີສັນພິເສດຄັ້ງໜຶ່ງ. ໂຄງປະກອບສະໜາມແລະຫໍກິລາທີ່ຄົບຖ້ວນສົມບູນ,ວຽກງານການຈັດຕັ້ງທີ່ດີເດັ່ນໄດ້ຮັບຄວາມຍ້ອງຍໍສັນລະເສີນຈາກມະຫາຄອບຄົວໂອລິມປິກແລະປະຊາຄົມໂລກຄະນະຜູ້ແທນກິລາຈີນໄດ້ຮັບໝາກຜົນທີ່ດີເລີດຄື:51





ລັນທຸງຂອງບັນດາຄະນະຜູ້ແທນເຂົ້າສູ່ພາກສະໜາມປິດງານກິລາໂອລິມປິກ 各代表团旗帜进入闭幕式现场 新华社 图



ການສະແດງສິລປະໃນພິທີປິດງານກິລາໂອລິມປິກ
闭幕式上的文艺表演 新华社 图



吴贵荣 图

ຫຼຽນຄຳແລະຫຼຽນໄຊ 100 ຫຼຽນ,ເປັນອັນດັບທີ 1 ໃນຫຼຽນຄຳງານກິລາໂອລິມປິກຄັ້ງທຳອິດ.ໄດ້ສ້າງຜົນງານດີທີ່ສຸດເຊິ່ງຄະນະຜູ້ແທນກິລາຈີນທີ່ເຂົ້າຮ່ວມງານກິລາໂອລິມປິກເປັນຕົ້ນມາ.

ຕອນຄ່ຳວັນທີ 24 ເດືອນ 8 ,ພາຍໃນສະໜາມກິລາແຫ່ງຊາດຈີນເຕັມໄປດ້ວຍບັນຍາກາດສຽງເພງມ່ວນໆ,ຟ້ອນລຳທຳເພງແລະສະເຫຼີມສະຫຼອງຢ່າງຟົດຟື້ນ.

ທ່ານຫູຈິນທາວ,ຈຽງເຈີມິງແລະທ່ານຊາກໂຣກເກຍ່າງເຂົ້າສູ່ເວທີປະທານທາມກາງສຽງດົນຕີທີ່ມ່ວນຫູໄດ້ໂບກມືສະແດງຄວາມນັບຖືຕໍ່ຜູ້ຊົມ,ທົ່ວສະໜາມໄດ້ມີສຽງຕົບມືຝົດສະໜັ່ນຂື້ນ.

ຂະນະນີ້,ຕົວເລກທີ່ປະກອບດ້ວຍໄຟດອກປະກົດເຫັນໃນເວຫາອາກາດສະໜາມກິລາ,ຜູ້ຊົມໝົດທຸກຄົນຮ້ອງໂຫນັບເວລາຖອຍຫລັງ 20 ໂມງຕົງ,ພິທີອັດງານກິລາໂອລິມປິກເປັນທາງການ,ທຸງຊາດ 5 ດາວທີ່ສີແດງສ ປຈີນຄ່ອຍໆຊັກທຸງຂື້ນເສົາໃນທ່າມກາງສຽງເພງຊາດຈີນທີ່ສະຫງ່າຜ່າເຜີຍ.

ສຽງກອງດັງຂື້ນ,ການສະແດງສິລປະ<<ລວມສູນ>>ພາກທີ 1 ໄດ້ເລີ່ມຕົ້ນ,ນັກຕີກອງ 200 ກ່ວາຄົນສະແດງຕີກອງຢູ່ໃຈກາງສະໜາມກິລາ.ສາວນ້ອຍທີ່ຫ້ອຍໄວ້ກະດິງ 1148 ຄົນຟ້ອນລຳທຳເພງໃນເວຫາອາກາດສະໜາມກິລາມີກອງຟ້າສອງກອງຄ່ອຍໆບິນມາ,ຄົນທັງຫຼາຍທີ່ກະຕຸ້ນໃຈນັ້ນໄດ້ປີ້ນຄືນປີ້ນມາຄືກະແສຟອງ.ສຽງກອງສຽງເພງສຽງກະດິງດັງຂື້ນເປັນປະສານສຽງ.

ບັນດາຜູ້ຖືທຸງຂອງຄະນະຜູ້ແທນກິລາ 204 ຄະນະທີ່ມາເຂົ້າຮ່ວມງານກິລາໂອລິມປິກຍ່າງເຂົ້າສູ່ສະໜາມກິລາໃນທາມກາງສຽງດົນຕີທີ່ອ່ອນຫວານ,ຄັນທຸງຄະນະຜູ້ແທນກິລາເກຼັກຊຶ່ງເປັນແຫຼ່ງທີ່ມາໂອລິມປິກເຂົ້າສູ່ສະໜາມກິລາກ່ອນກວ່າໝູ່,ທຸງຄະນະຜູ້ແທນກິລາຈີນຊຶ່ງເປັນເຈົ້າພາບເຂົ້າສູ່ສະໜາມກິລາຕາມທີ່ຫຼັງ,ບັນດານັກກິລາຂອງປະເທດຕ່າງໆຍ່າງເຂົ້າສູ່ສະໜາມກິລາພ້ອມກັນຈາກ 4 ຊ່ອງທາງ.ຜູ້ທີ່ຍ່າງໄປທາງໜ້ານັ້ນແມ່ນນັກກິລາທີ່ໄດ້ຮັບຫຼຽນ, ຜູ້ຊົມສະໜາມໄດ້ແກ່ວງວີໄຫມສີເພື່ອສະແດງຄວາມເຄົາລົບນັບຖືຕໍ່ນັກກິລາ.

ຕໍ່ມາ,ໄດ້ຈັດພິທີທີ່ຄຶກຄື້ນເບີກຫຼຽນຄຳໃຫ້ແກ່ນັກກິລາທີ່ໄດ້ຮັບຫຼຽນຄຳມາລາທອນເພດຊາຍ.





ການສະແດງໃນພິທີປິດງານກິລາໂອລິມປິກ
闭幕式上的表演 新华社 图




ລົດບັສລອນດອນຂັບເຂົ້າສູ່ພາກສະໜາມກິລາ
伦敦巴士开进会场　新华社 图

ກຳມະການ 3 ທ່ານທີ່ຫາກໍ່ເລືອກຕັ້ງໃໝ່ເປັນຄະນະກຳມະການກິລາໂອລິມປິກຕ່າງໜ້າງານກິລາໂອລິມປິກມອບຊໍ່ດອກໄມ້ໃຫ້ແກ່ຜູ້ແທນອາສາສະໝັກ 12 ຄົນຂອງງານກິລາໂອລິມປິກປັກກິ່ງ. ໃນລະຍະງານກິລາໂອລິມປິກປັກກິ່ງມີຜູ້ອາສາສະໝັກເກືອບ 1 ລ້ານ 5 ແສນຄົນປະກອບສ່ວນເຂົ້າງານກິລາໂອລິມປິກຢ່າງບໍ່ຮູ້ອິດບໍ່ຮູ້ເມື່ອຍດ້ວຍບໍລິການທີ່ມີຄຸນນະພາບດີເລີດ, ໄດ້ຮັບຄວາມນິຍົມຊົມຊອບແລະຍ້ອງຍໍສັນລະເສີນຈາກຜູ້ຊົມອັນໄພສານ, ງານກິລາໂອລິມປິກສາກົນໄດ້ຕົກລົງກັນເປັນພິເສດ, ເພີ່ມຕື່ມພິທີຢູ່ໃນພິທີອັດງານກິລາໂອລິມປິກເພື່ອສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈຕໍ່ຜູ້ອາສາສະໝັກອັນໄພສານ.

ທ່ານລິວຊີປະທານງານກິລາໂອລິມປິກປັກກິ່ງໄດ້ກ່າວຄຳປາໄສທີ່ພິທີປິດສາກຂອງງານກິລາໂອລິມປິກ, ທ່ານຕ່າງໜ້າຄະນະຊີກຳມະການຈັດຕັ້ງງານກິລາໂອລິມປິກປັກກິ່ງສະແດງຄວາມຂອບອົກຂອບໃຈຕໍ່ງານກິລາໂອລິມປິກສາກົນ, ການຈັດຕັ້ງກິລາລາຍການດຽວສາກົນ. ງານກິລາໂອລິມປິກຂອງບັນດາປະເທດແລະເຂດແຄ້ວນຕ່າງໆແລະບັນດາເພື່ອນມິດທີ່ປະກອບສ່ວນເຂົ້າງານກິລາໂອລິມປິກຄັ້ງນີ້. ທ່ານລິວຊີເວົ້າວ່າ, ທອນໄຟໂອລິມປິກລຸກພ່າງໆກໍ່ຈະດັບມອດ, ໄຟຮັກຫອມໂລກຂອງປະຊາຊົນຈີນຈະລຸກຂຶ້ນຕະຫຼອດໄປ, ພວກເຮົາຂໍອວຍພອນການເຄື່ອນໄຫວກິລາໂອລິມປິກຈົ່ງພັດທະນາຢ່າງບໍ່ຢຸດຢັ້ງ.

ທ່ານຊາກຣົກເກປະທານງານກິລາໂອລິມປິກສາກົນກ່າວຄຳປະໄສຢູ່ໃນພິທີອັດງານກິລາ. ທ່ານເວົ້າວ່າ, ນີ້ແມ່ນງານກິລາໂອລິມປິກອັນແທ້ຈິງຫາອັນປຽບບໍ່ໄດ້ຄັ້ງໜຶ່ງ, 16 ວັນທີ່ສະຫງ່າລາສີຈະປະທັບໃຈຢູ່ໃນດວງໃຈຂອງພວກເຮົາຈັກເທົ່າໃດໆ. ທ່ານຕ່າງໜ້າງານກິລາໂອລິມປິກສາກົນສະແດງຄວາມຂອບອົກຂອບໃຈຕໍ່ປະຊາຊົນຈີນ. ຂອບອົກຂອບໃຈຕໍ່ຜູ້ອາສາສະໝັກທີ່ດີເດັ່ນໝົດທຸກຄົນຂອບໃຈຄະນະຈັດຕັ້ງງານກິລາໂອລິມປິກປັກກິ່ງ. ທ້າຍສຸດທ່ານຊາກຣົກເກປະກາດວ່າ, ງານກິລາໂອລິມປິກຄັ້ງທີ 29 ປິດສາກແລະຮຽກຮ້ອງວ່າພົບກັນໃໝ່ຢູ່ງານກິລາໂອລິມປິກລອນດອນຄັ້ງທີ 30.

ຕໍ່ມາ, ເລີ່ມເປີດພິທີມອບຮັບທຸງງານກິລາໂອລິມປິກ, ທ່ານກົວຈິງລອງເຈົ້າຄອງນະຄອນປັກກິ່ງຮັບເອົາຄັນທຸງ 5 ວົງມົນຈາກມືຂອງນັກຖືຄັນທຸງ, ແກ່ວງທຸງໃສ່ຜູ້ຊົມທົ່ວສະໜາມ, ແລ້ວມອບໃຫ້ທ່ານຊາກຣົກເກປະທານຄະນະກຳມະການກິລາໂອລິມປິກສາກົນ, ທ່ານຊາກຣົກເກເອົາທຸງງານກິລາໂອລິມປິກມອບໃຫ້ທ່ານປາວລິສ. ຢອນແຊັງເຈົ້າຄອງນະຄອນລອນດອນເຊິ່ງເປັນເມືອງເຈົ້າພາບ.

ຄະນະຈັດຕັ້ງງານກິລາໂອລິມປິກລອນດອນໄດ້ມີການສະແດງຮັບເອົາທຸງທີ່ສວຍງາມເປັນເວລາ 8 ນາທີ, ລົດບັດສີແດງສອງຊັ້ນທີ່ມີສີສັນລອນດອນຄັນໜຶ່ງຂັບມາເຖິງສະໜາມກິລາ, ກໍ່ປ່ຽນເປັນເວທີສະແດງເຄື່ອນທີ່ແຫ່ງໜຶ່ງ, ນັກຮ້ອງຍິງທີ່ລືຊ່າອັງກິດຮ້ອງເພງຊາດອັງກິດໃຫ້ບັນເລງກີຕານັກຟ້ອນອັງກິດຟ້ອນລຳທຳເພງທີ່ມີສີສັນວັດທະນະທຳອັງກິດໄດ້ຮັບສຽງຕົບມືຈາກຜູ້ຊົມ, ທ່ານເບເຄີຫານມຸດນັກກິລາເຕະບານທີ່ລືຊ່າອັງກິດເຕະບານໜ່ວຍໜຶ່ງໃສ່ພາຍໃນສະໜາມກິລາດ້ວຍຄວາມເບີກບານໃຈ.



ຄັນທຸງຂອງບັນດາຄະນະຜູ້ແທນເຂົ້າສູ່ພາກສະໜາມ
各代表团旗帜入场 新华社 图

21 ໂມງ 19 ນາທີ, ຂັ້ນໄດເຮືອບິນທີ່ມີກາງານກິລາໂອລິມປິກຄັນໜຶ່ງປະກົດເຫັນຢູ່ໃນສະໜາມກິລາ, ນັກກິລາ3ຄົນທີ່ຈະອອກເດີນຂຶ້ນສູ່ຂັ້ນໄດ, ຫຼຽວເບິ່ງທອນໄຟຍັງຄົງລຸກພ່າງດ້ວຍຄວາມອາໄລອາວອນ, ນັກກິລາຜູ້ໜຶ່ງເອົາມ້ວນພາບຮູບທີ່ສວຍງາມມ້ວນໜຶ່ງອອກຈາກຖົງເປ້, ຄ່ອຍໆເປີດອອກ, ທາມກາງສຽງດົນຕີທີ່ມ່ວນຫູໄດ້ບັນທຶກໄວ້ມ້ວນຮູບພາບຊື່ອກະພິບຕາຂອງງານກິລາໂອລິມປິກທີ່ບໍ່ຫອນຊິຫຼົງລືມໄດ້. ແລ້ວເປີດເບິ່ງຢູ່ເທິງພາບຈໍໃຫຍ່ຂອງສະໜາມກິລາ, ແລ້ວຄ່ອຍໆມ້ວນຂຶ້ນ. ແຕ່ວັນທີ 8 ທີ 9 ທີ 10...ເມື່ອເວລາໜ້າຮູບພາບວັນທີ 24 ຖືກມ້ວນຂຶ້ນ, ສຽງເພງ<<ຂ້ອຍກັບເຈົ້າ>>ທີ່ເປັນຫົວເລື່ອງຂອງງານກິລາໂອລິມປິກປັກກິ່ງດັງຂຶ້ນອີກ, ທອນໄຟລຸກພ່າງໆຂອງງານກິລາໂອລິມປິກປັກກິ່ງຄ່ອຍໆດັບມອດ.

ຄຽງຄູ່ກັບທອນໄຟໂອລິມປິກຄ່ອຍໆດັບມອດ, ທອນໄຟອີກທອນໜຶ່ງພຸ່ງຂຶ້ນຢູ່ໃຈກາງສະໜາມກິລາ, ນັກສະແດງ396ຄົນປີນຂຶ້ນເປັນ "ທາດແຫ່ງຄວາມຈື່ຈຳ" ທາດໜຶ່ງ, ຈຳລອງຮູບພາບຂອງທອນໄຟໂອລິມປິກສືບຕໍ່ລຸກພ່າງໆດ້ວຍຕົວຮ່າງກາຍຊູທີ່ແໜນໆຕຶງ. ຜູ້ຊົມ ທົ່ວສະໜາມໄຕ້ທອນໄຟໃນມືພ້ອມກັນ. ໄດ້ສ່ອງແສງສະຫວ່າງລາສີກັບທອນໄຟໃນສະໜາມ. ສະແດງເຖິງຫົວຂໍ້ທີ່ທອນໄຟໂອລິມປິກຝັງໄວ້ໃນດວງໃຈຈີນເທົ່າໃດໃດ.

ຢູ່ເທິງ<<ທາດແຫ່ງຄວາມຈື່ຈຳ>>, ນັກສະແດງໄດ້ວາງທ່າປີນຂຶ້ນ. ແລ່ນໄວ. ສຸດທ້າຍກາຍເປັນຮູບຈຳລອງກາງານກິລາໂອລິມປິກປັກກິ່ງທີ່ວ່າ "ກາຈີນ. ປັກກິ່ງທີ່ເຕັ້ນຟ້ອນ", ແຖບໄໝ16ເສັ້ນຄ່ອຍໆຂຶ້ນຕາມ "ທາດແຫ່ງຄວາມຈື່ຈຳ" ແລ້ວເປີດອອກໃນເວຫາອາກາດ, ສຸດທ້າຍກາຍເປັນ "ຕົ້ນໄມ້ເມກເຝືອສີລົມງຄຸນທີ່ເປັນສັນຍາລັກມິດຕະພາບ, ເບີກບານມ່ວນຊື່ນຕົ້ນໜຶ່ງ. ບັດດຽວ, ໄຟດອກທີ່ລວງຕາພຸ່ງຂຶ້ນ, ສ່ອງແສງແວວວາວສະຫວ່າງລາສີໃນເວຫາອາກາດສະໜາມກິລາ.

"ປັກກິ່ງ, ປັກກິ່ງ, ຂ້ອຍຮັກປັກກິ່ງ, ທອນໄຟໂອລິມປິກຈູດໄຟແຫ່ງຄວາມອົບອຸ່ນໃນດວງໃຈຂຶ້ນ, ປັກກິ່ງ, ປັກກິ່ງ, ຂ້ອຍຮັກປັກກິ່ງ, ແສງສະຫວ່າງ ໂອລິມປິກສ່ອງແສງເຂົ້າດວງໃຈຂອງໂລກ..." ການສະແດງສິລປະພາກທີ 3<<ກາບນິວານ>>ເລີ່ມຕົ້ນໃນທາມກາງອາລົມຈິດຢ່າງຝົດຟື້ນ, ກາຍຍະສິນທີ່ຈັບອົກຈັບໃຈສຽງເພງທີ່ມ່ວນໆ. ກາຍຍະກຳພິເສດໃນເວຫາອາກາດທີ່ລວງຕາ, ການສະແດງທີ່ງາມຕາພາໃຫ້ຄົນຫຼົງໄຫຼບໍ່ຢາກກັບບ້ານ.

ທ້າຍສຸດນີ້, ນັກຮ້ອງ 100 ກ່ວາຄົນຮ້ອງເພງ<<ແຂກທີ່ມາແຕ່ທາງໄກຂໍເຊີນທ່ານຈົ່ງໄວ້ລົງມາ>>, ນັກກິລາໃນສະໜາມແລະນັກສະແດງໄດ້ຟ້ອນລຳວົງຂຶ້ນ, ຜູ້ຊົມທົ່ວສະໜາມພາກັນລຸກຂຶ້ນ, ຮ້ອງໂຫຍ່າງດຸເດືອດ, ແຖບໄໝສີລົມງຄຸນປິວສະບັດໃນສະໜາມກິລາ, ເຈ້ຍສີເຫຼື້ອມຕາປິວຢູ່ໃນກາງຫາວ, ສຽງເພງ, ສຽງໄຊໂຍ. ສຽງຫົວດັງກ້ອງສະໜັ່ນຫວັ່ນໄຫວ. ສະໜາມກິລາແຫ່ງຊາດກາຍເປັນທະເລທີ່ເບີກບານມ່ວນຊື່ນ.

ໃນຂະນະດຽວກັນ, ໃນ 18 ເມືອງຂອງນະຄອນປັກກິ່ງໄດ້ຍິງໄຟດອກທີ່ແວວວາວພ້ອມກັນ, ໃນກາງຫາວສະໜາມຫຼວງທຽນອານເໝິນ, ໄຟດອກທີ່ເປັນດອກເປັນດອກລວມສູນເປັນວົງມົນໃຫຍ່ທີ່ແວວວາວ, ເປັນສັນຍາລັກງານກິລາໂອລິມປິກປັກກິ່ງໄດ້ຮັບຜົນສຳເລັດອັນຈົບງາມ.



ທ່ານປອນແຊັງເຈົ້າຄອງນະຄອນລອນດອນ(ຊ້າຍ)ຮັບເອົາຄັນທຸງງານໂອລິມປິກຈາກມືຂອງທ່ານຊາກຣົກເກປະທານຄະນະກຳມະການງານໂອລິມປິກສາກົນ

伦敦市市长约翰逊（左）从国际奥委会主席罗格手中接过奥林匹克会旗
新华社 图

# ທົ່ວທັງໂລກຍ້ອງຍໍສັນລະເສີນ "ອາລົມຈິດງານກິລາໂອລິມປິກ" ຈີນ



ຜູ້ຊົມຈີນເຊຍໃຫ້ນັກກິລາທີ່ເຂົ້າຮ່ວມການແຂ່ງຂັນຢ່າງຟົດຟື້ນ 中国观众为参赛运动员热情加油 新华社 图






ພາບ1,2.ຊົມເບິ່ງການແຂ່ງຂັນກິລາໂດຍມີຄວາມສົດຊື່ນ
①②兴致勃勃看比赛 吴贵荣 图



## 世界赞叹中国“奥运热情”

“加油，加油！”——在北京及其周边的体育场、游泳馆和其他体育场馆里，到处都能听到这种令人愉悦的鼓励声。这是一种集体性的鼓励，为运动员每一个完成的动作，每一支射出的箭，每一次举起的重量……这就是奥运赛场的氛围，热烈而朴实。参加、观看和报道北京奥运会的各国运动员、观众和媒体纷纷指出，中国民众体现出来的奥运热情令人难忘，观看比赛的中国观众充满善意、气氛热烈，这是国外友人对北京奥运会的“第一大满意”。

"ສູ້!ສູ້!"--ຢູ່ທີ່ປັກກິ່ງແລະສະໜາມກິລາ,ຫໍລອຍນ້ຳ,ສະໜາມແລະຫໍກິລາບ່ອນອື່ນ,ທຸກໆບ່ອນກໍ່ໄດ້ຍິນສຽງຮ້ອງໂຫ່ໄຊໂຍທີ່ເຮັດໃຫ້ຜູ້ຄົນທັງຫລາຍກະຕຸ້ນແນວຄິດຈິດໃຈຂອງຜູ້ຄົນໃນລັກສະນະລວມໝູ່ຊະນິດໜຶ່ງເພື່ອການກະທຳທຸກຢ່າງຂອງນັກກິລາທີ່ສຳເລັດ,ທຸກລູກທະນູທີ່ນັກກິລາຍິງອອກ,ທຸກນ້ຳໜັກທີ່ນັກກິລາຍົກຂຶ້ນ.ນີ້ກໍ່ແມ່ນບັນຍາກາດຂອງສະໜາມແຂ່ງຂັນກິລາໂອລິມປິກ,ສຸດທີ່ຟົດຟື້ນແລະສຸຂຸມຮອບຄອບ.

ນັກກິລາ,ຜູ້ຊົມແລະສື່ມວນຊົນຂອງປະເທດຕ່າງໆທີ່ມາເຂົ້າຮ່ວມຊົມເບິ່ງແລະລາຍງານຂ່າວກິລາໂອລິມປິກພາກັນຍ້ອງຍໍສັນລະເສີນດ້ານອາລົມຈິດຕໍ່ງານກິລາໂອລິມປິກຂອງປະຊາຊົນຈີນທີ່ສະແດງອອກນັ້ນ,ເຮັດໃຫ້ຄົນທັງຫລາຍບໍ່ທ່ອນຈື່ຫຼືລືມໄດ້ຜູ້ຊົມການແຂ່ງຂັນຂອງຈີນເຕັມໄປດ້ວຍຄວາມຮັກຄວາມແພງ,ບັນຍາກາດສຸດທີ່ຟົດຟື້ນ,ນີ້ແມ່ນ"ເພິ່ງພໍໃຈອັນທີ່ໜຶ່ງຂອງເພື່ອນຕ່າງປະເທດຕໍ່ງານກິລາໂອລິມປິກປັກກິ່ງ.

ບໍ່ວ່າໃຜຈະນະຫຼືເສຍຜູ້ຊົມຈີນລ້ວນແຕ່ຮ້ອງໂຫ່ໄຊໂຍຢ່າງຟົດຟື້ນ.

ໜັງສືພິມ"ຕອນເຊົ້ານານຮົວ"ຂອງຮົງກົງໄດ້ລົງພິມບົດຄວາມທີ່ວ່າ<<ກອງທັບຜູ້ຊົມຈີນຍ້ອນການກະທຳອັນດີເລີດໄດ້ຮັບຍ້ອງຍໍສັນລະເສີນ>>,ຄຳຂວັນເຊຍໃຫ້ຈີນແລະທຸງຊາດຈີນ



ນັກທ່ອງທ່ຽວຕ່າງປະເທດຖ່າຍຮູບກັບເດັກວາສະໜາ
外国游客与福娃合影　吴贵荣　图

ຕິດຢູ່ໜ້າຜາກ. ສຽງຮ້ອງໄຊໂຍຊ່ວຍທີມກິລາຈີນແລະທີມກິລາຕ່າງປະເທດຂອງ "ກອງທັບຜູ້ຊົມຈີນໄດ້ສະເທືອນສະໜາມແລະຫໍກິລາໂອລິມປິກ, ບັນດານັກກິລາແລະຜູ້ຊົມອື່ນໆໄດ້ຍ້ອງຍໍສັນລະເສີນຕໍ່ພວກເຂົາເຈົ້າ, ຍ້ອນວ່າ, ຜູ້ຊົມຈີນບາງເທື່ອກໍ່ສະໜັບສະໜູນຄູ່ຕໍ່ສູ້ທີ່ເປັນມູນເຊື້ອຂອງຍີ່ປຸ່ນ.

ໜັງສືພິມ<<ເຟກູ໋າ>>ຂອງຝລັ່ງລາຍງານຂ່າວວ່າ:ຢູ່ໃຕ້ການຊຸກຍູ້ຂອງຄວາມອົບອຸ່ນ, ມີບັງລາຍການແຂ່ງຂັນ, ບ່ອນນັ່ງບໍ່ມີບ່ອນຫວ່າງ, ຕົວຢ່າງກາຍຍະກຳ, ມວຍ. ແລະຍົກນ້ຳໜັກທີ່ຄົນຈີນເຄີຍຮູ້ຈັກນັ້ນ.

ເຖິງແມ່ນວ່າແມ່ນບານມືແມ່ນການກິລາຂອງຄົນຈີນບໍ່ຫຼິ້ນນັ້ນ, ຜູ້ຊົມທີ່ມາເບິ່ງການແຂ່ງຂັນນັ້ນ, ລ້ວນແຕ່ແມ່ນເປີດໃຈທີ່ສຸດ, ໃນສະໜາມເຕັນນິດແລະສະໜາມແຂ່ງເຮືອໃບ, ເຖິງແມ່ນວ່າຝົນຕົກແຮງ, ຜູ້ຊົມຈີນກໍ່ບໍ່ສາມາດອອກຈາກເດີນກິລາກາງແຈ້ງເລີຍແມ່ນລໍຖ້າຟ້າແດດອອກຫຼືພາກສ່ວນອຸຕຸນິຍົມດຳເນີນການກິດຈະກຳສາຍຝົນດ້ວຍຄົນເຮັດ.

ອີງຕາມ<<ໜັງສືພິມວໍຊິນຕັນ>>ເປີດເຜີຍວ່າ:ເຈົ້າໜ້າທີ່ຈີນເປັນຫ່ວງວ່າແຟນບານອາດຈະຮ້ອງໂຫ່ໂອທະການຕໍ່ນັກກິລາຂອງປະເທດທີ່ໄຮ້ໄມ້ຕີຈິດ. ແຕ່ກໍ່ບໍ່ຮູ້ຍາມໃດຮ້ອງໂຫ່, ແຕ່ວ່າ, ເລື່ອງທີ່ໄດ້ຢັ້ງຢືນວ່າ. ການຫ່ວງໃຍເຫຼົ່ານີ້ແມ່ນບໍ່ຈຳເປັນດອກ. ຢູ່ໃນການແຂ່ງຂັນບານບ້ວງເພດຊາຍລະຫວ່າງຈີນກັບອາເມລິກາຜູ້ຊົມທີ່ເປັນເຈົ້າພາບໄດ້ຮ້ອງໄຊໂຍຢ່າງຟົດຟື້ນອັນດຽວກັນຕໍ່ທີມບານບ້ວງທັງສອງປະເທດ. ເມື່ອເວລານັກກິລາຈີນຢາວມິງໄດ້ໂຍນບານເຂົ້າໄດ້ 3ຄະແນນຜູ້ຊົມຈີນຮ້ອງໂຫໄຊໂຍຢ່າງດຸເດືອດແກ່ເພິ່ນ, ນັກກິລາງານກິລາໂຄບິກປ້ອນບານເຂົ້າສຳເລັດແລ້ວ, ຜູ້ຊົມຈີນກໍ່ຕົບມືຊົມເຊີຍຢ່າງຟົດຟື້ນຄືກັນ, ຜູ້ຊົມຜູ້ຍິງໜຶ່ງເວົ້າຕໍ່ນັກຂ່າວວ່າ, ພວກເຂົາເຈົ້າຕ້ອງເຊຍໃຫ້ທີມບານທັງ 2ປະເທດ, ຍ້ອນວ່າ "ຈີນຊົມເຊີຍອາເມລິກາ."





ແບ່ງປັນສະເຫວີຍບົດຮຽນ,ຍົກສູງລະດັບລວມກັນ: ທ່ານປາວເວີຄູຝຶກຄົນຝລັ່ງທີ່ສອນ ທ.ຈົງມານ ນັກກິລາຟັນດາບຈີນເຊິ່ງໄດ້ເອົາຊະນະນັກກິລາຟັນດາບຝລັ່ງໄດ້ຮັບແຊັມໂລກຟັນດາບເພດຊາຍ

分享经验 共同提高 图为中国佩剑教练法国人鲍埃尔调教的中国剑客仲满战胜法国选手获得男子佩剑冠军 新华社 图



ຜູ້ຊົມຈີນເຊຍໃຫ້ນັກກິລາທີ່ເຂົ້າຮ່ວມການແຂ່ງຂັນຢ່າງຟົດຟື້ນ

观众为参赛运动员热情加油 吴贵荣 图

ໜັງສືພິມດັ່ງກ່າວນີ້ຊີ້ອອກວ່າ,ອາລົມຈິດຂອງຜູ້ຊົມຈີນບໍ່ພຽງແຕ່ສຳລັບນັກກິລາຈີນ,ເຖິງແມ່ນວ່າ,ໃນການແຂ່ງຂັນບໍ່ມີນັກກິລາຈີນເຂົ້າຮ່ວມນັ້ນ,ຜູ້ຊົມຈີນກໍແມ່ນສຸຂຸມຮອບຄອບຕົບມືຊົມເຊີຍຢ່າງມີສຸພາບ.

ຫຼຽນໄຊບໍ່ແມ່ນຄວາມຄອງຄອຍແຕ່ອັນດຽວຂອງພວກເຮົາ

ໜັງສືພິມໂລກຝລັ່ງຕີລາຄາຕໍ່ງານກິລາໂອລິມປິກປັກກິ່ງແມ່ນວາລະການແຂ່ງຂັນກິລາໂອລິມປິກໄດ້ສຳເລັດເຄິ່ງໜຶ່ງແລ້ວຈີນໄດ້ຮັບຫຼຽນຄຳ,ຫຼຽນເງິນ,ຜູ້ຊົມຈີນຮ້ອງໂຫ່ໄຊໂຍຈົນສຸດຂີດເຂົາເຈົ້າມາເບິ່ງການແຂ່ງຂັນກໍແມ່ນສະເຫວີຍສຸກສະບາຍ.

ໜັງສືພິມດັ່ງກ່າວນີ້ໄດ້ລາຍງານຂ່າວຂອງບັນດາເວັບໄຊຂອງຈີນທີ່ມີຄວາມຄິດຕໍ່ຫຼຽນຄຳລັກສະນະບຸກຄະເລີກ,ເວັບໄຊດັ່ງກ່າວນີ້ໄດ້ຂຽນຄຳຂວັນທີ່ວ່າ:ຖິ້ມພາລະຫຼຽນໄຊສະເຫວີຍຄວາມເບີກບານມ່ວນຊື່ນຂອງການແຂ່ງຂັນ,ຮັກຫຼຽນໄຊແຕ່ຍິ່ງຮັກນ້ຳໃຈກິລາ. "ຫຼຽນໄຊບໍ່ແມ່ນຄາວມປາຖະໜາແຕ່ອັນດຽວຂອງພວກເຮົາ."

ວັນທີ່ 15 ເດືອນ 8,ເລີ່ມເປີດການແຂ່ງຂັນແລ່ນລານ,ໃຜໃຜກໍຮູ້ແລ້ວວ່າ,ກຳລັງຂອງບັນດາລາຍການແລ່ນລານຂອງຈີນທຽບໃສ່ທີມແຂງຂອງເອີລົບແລະອາເມລິກາຍັງອ່ອນ,ນັກກິລາຈີນທີ່ມີໂອກາດໄດ້ຮັບຫຼຽນຄຳໃນສະໜາມດັ່ງກ່າວນີ້ກໍບໍ່ຫຼາຍປານໃດ,ແຕ່ກໍບໍ່ສະທ້ອນເຖິງຄວາມຮ້ອງໂຫ່ໄຊໂຍຜູ້ຊົມຈີນທີ່ມີຕໍ່ບັນດານັກກິລາປະເທດຕ່າງໆ.

ໜັງສືພິມຝລັ່ງລາຍງານຂ່າວ,ວັນທີ່ 15,ບໍ່ມີນັກກິລາທີ່ຊ່າລືຂອງຈີນເຂົ້າຮ່ວມການແຂ່ງຂັນ,ການແຂ່ງຂັນພຽງແຕ່ແຂ່ງຂັນຮອບທີ 1,ແຕ່ຜູ້ຊົມຈີນໃນຮັງນົກມີ 70 ພັນກ່ວາຄົນຍັງຄົງມີອາລົມຈິດຢ່າງຟົດຟື້ນ,ຮ້ອງໂຮໂອທະການວ່າ: "ສູ້!" ເມື່ອໄດ້ປະກາດຜູ້ຊະນະແລ້ວ,ຜູ້ຊົມກໍແກ່ວງທຸງຊາດຈີນ.

ສື່ມວນຊົນດັ່ງກ່າວນີ້ຊີ້ອອກວ່າ,ບັນຍາກາດຟົດຟື້ນທີ່ແຟນກິລາຮ້ອງໂຮໄຊໂຍດ້ວຍສຽງດັງສູງໃນສະໜາມແລະຫໍກິລາໂອລິມປິກນັ້ນໄດ້ຮັບຄວາມຍ້ອງຍໍສັນລະເສີນມາຈາກທົ່ວໂລກ.ນາງໄຣລີປາ.ຟັງຕັນນັກກິລາເພດຍິງອາຍຸ 27 ປີເວົ້າຕໍ່ສຳນັກຂ່າວດັ່ງກ່າວນີ້ວ່າ,ພວກເຮົາເປັນຄົນອາເມລິກາ,ພວກເຂົາເຈົ້າກໍໄດ້ໃຫ້ການສະໜັບສະໜູນຢ່າງໃຫຍ່ຫຼວງໃຫ້ແກ່ພວກເຮົາ,ຂ້ອຍຮັກຜູ້ຊົມສ່ວນນີ້.

ຜູ້ອາສາສະໝັກແມ່ນນາມບັດຂອງຈີນ. ຜູ້ຊົມຈີນໃນສະໜາມການແຂ່ງຂັນໂອລິມປິກໄດ້ໃຫ້ພາບປະທັບໃຈຢ່າງເລິກເຊິ່ງໃຫ້ແກ່ເພື່ອນມິດຂອງບັນດາປະເທດ, ຜູ້ອາສາສະໝັກທີ່ຮັບໃຊ້ຢູ່ໃນຫຼືນອກສະໜາມຫໍກິລາໂອລິມປິກໂດຍການເຮັດວຽກບໍ່ຮູ້ອິດເມື່ອຍນັ້ນກໍໄດ້ຮັບຄວາມຍ້ອງຍໍສັນລະເສີນຈາກຄົນທັງຫລາຍ, ຖ້າບໍ່ມີຜູ້ອາສາສະໝັກມີສ່ວນຮ່ວມແລະມີການຊ່ວຍເຫຼືອງານກິລາໂອລິມປິກປັກກິ່ງກໍບໍ່ທ່ອນຊິໄດ້ຮັບຜົນສຳເລັດດັ່ງທີ່ກ່າວມາເທິງນີ້<<ໜັງສືພິມໂທລະຄົມສື່ສານ>>ອັງກິດຂຽນບົດຄວາມວ່າ, ຢູ່ໃນໝູ່ບ້ານໂອລິມປິກ, ແຂກບໍ່ຕ້ອງໄຂປະຕູເອງ, ຜູ້ອາສາສະໝັກຊາວໜຸ່ມທີ່ຍິ້ມແຍ້ມແຈ່ມໃສບໍລິການໃຫ້ເຂົາເຈົ້າຢູ່ທຸກເມື່ອທຸກເວລາ. ຢູ່ໃນທົ່ວນະຄອນປັກກິ່ງ, ສະພາບການດັ່ງກ່າວນີ້ຈະເຫັນໄດ້ທຸກຫົນທຸກແຫ່ງ, ຜູ້ອາສາສະໝັກເປັນພັນພັນຄົນນຸ່ງເຄື່ອງສີຟ້າຫຼືສີແດງ, ພະຍາຍາມເຮັດວຽກດ້ວຍຄວາມຈິງໃຈໂດຍບໍ່ເອົາຄ່າຕອບແທນໃດໃດທັງສິ້ນ, ບໍ່ວ່າຢູ່ບ່ອນ



ໃດ, ເຂົາເຈົ້າປາຖະໜາເປັນເຈົ້າການສະໜອງບໍລິການ.

ໜັງສືພິມດັ່ງກ່າວນີ້ບັນລະຍາຍພາບປະທັບໃຈທີ 1 ຕໍ່ປັກກິ່ງຄືະດິນຕອນໜຶ່ງລ້ອມແຕ່ຖືກປະດັບປະດາເປັນລະບຽບຮຽບຮ້ອຍດີ, ອີ້ເຫຍື້ອຍປັດກວາດອອກຕາມຖະໜົນຫົນທາງທຸກເສັ້ນ ໂດຍໄວອ່າງດອກໄມ້ເປັນໝູ່ເປັນຝູງ, ຟ້າວຟັ່ງເຮັດວຽກຢູ່ແຄມທາງ, ຕັດດອກໄມ້ເປັນ 5 ວົງມົນຫຼືສັນຍາລັກງານ ໂອລິມປິກ, ສິ່ງເຫຼົ່ານີ້, ເບິ່ງໄປແລ້ວບໍ່ມີອັນໃດທີ່ບັງຄັບໃຫ້ເຂົາເຈົ້າເຮັດ, ຢູ່ໃນບັນຍາກາດທີ່ສົດຊື່ນນີ້ເຕັມໄປດ້ວຍຄວາມສະໝັກໃຈທີ່ເປັນໜ້າງືດ.


ບັນດານັກຮຽນສະເຫວີຍຄວາມເບີກບານມ່ວນຊື່ນທີ່ມາຈາກງານກິລາ ໂອລິມປິກທີ່ສະໜາມຊັກທຸງຂຶ້ນເສົາທີ່ບ້ານງານ ໂອລິມປິກປັກກິ່ງ
学生在北京奥运村升旗广场尽情享受奥运带来的快乐　新华社 图

ໜັງສືພິມເຝກູາ ໂລຂອງຝລັ່ງລາຍງານຂ່າວວ່າ, ຢູ່ໃນສວນສາທາລະນະງານ ໂອລິມປິກ, ສິ່ງທີ່ພວກເຮົາເຫັນຫຼາຍທີ່ສຸດກໍ່ແມ່ນຜູ້ອາສາສະໝັກທີ່ນຸ່ງເຄື່ອງສະເພາະ, ພວກເຂົາເຈົ້າທີ່ມີໃບໜ້າຍິ້ມແຍ້ມຢູ່ທຸກທຸກບ່ອນຂໍພຽງແຕ່ມີຄວາມຮ້ອງຂໍກໍ່ມີຄວາມຕອບສະໜອງ, ສ່ວນຫຼາຍກໍ່ຮູ້ພາສາອັງກິດນ້ອຍໜຶ່ງ, ແຕ່ມາເຖິງປັດຈຸບັນນີ້, ວຽກງານການຈັດຕັ້ງຂອງງານກິລາ ໂອລິມປິກແມ່ນດີຫຼາຍ, ສິ່ງເຫຼົ່ານີ້ເຮັດໃຫ້ຄົນທັງຫຼາຍມີຄວາມຮູ້ສຶກແມ່ນວຽກງານການຈັດຕັ້ງແມ່ນຄົບຖ້ວນລະອຽດທີ່ສຸດແລະເຂັ້ມງວດທີ່ສຸດ.

<<ໜັງສືພິມນິວຢອກ>>ສະບັບອິນເຕີເນັດຂຽນບົດຄວາມວ່າ, ສັນລະເສີນຜູ້ອາສາສະໝັກ "ເຜີຍແຜ່ຄວາມຍິ້ມແຍ້ມ, ສ້າງຄວາມກົມກຽວ". ໜັງສືພິມດັ່ງກ່າວນີ້ສົນໃຈຢູ່ໃນຜູ້ອາສາສະໝັກທີ່ນຸ່ງເຄື່ອງສີຟ້າ 2008 ປັກກິ່ງປະມານ 1 ແສນຄົນ "ມີ 90%ກໍ່ແມ່ນຊາວໜຸ່ມປະມານ 20ປີ, ພວກເຂົາເຈົ້າເຮັດວຽກຢູ່ທຸກໆຂົງເຂດ, ຊ່ວຍວຽກຢູ່ສະຖານີກວດກາຄວາມປອດໄພ. ຂັບລົດໃນສະໜາມກອຟ. ຕອບທຸກບັນຫາ, ຫຼືຍິນດີຕ້ອນຮັບຖາມຂ່າວຄົນທັງຫຼາຍ.

ວັນທີ່17<<ໜັງສືພິມຮ່ວມສຳພັນ>>ສິງກາ ໂປຂຽນບົດຄວາມວ່າ, ຊາວຈີນຮູ້ສຶກພາກພູມໃຈຕໍ່ປະເທດຈີນຈັດງານກິລາ ໂອລິມປິກ, ເມື່ອພົບກັນກັບນັກທ່ອງທ່ຽວຕ່າງໆປະເທດ, ເຖິງແມ່ນວ່າບໍ່ຮູ້ພາສາ, ກໍ່ສາມາດໃຫ້ການຊ່ວຍເຫຼືອເພື່ອເປັນເຈົ້າພາບ, ເຮັດໃຫ້ແຂກຮູ້ສຶກວ່າຕົນເອງມາເຖິງຄອບຄົວແລ້ວ, ເພື່ອເປົ້າໝາຍອັນໜຶ່ງອັນດຽວທີ່ໄດ້ປາຖະໜາແຕ່ດົນແລ້ວຢູ່ໃນປະເທດຈີນແຕ່ຂັ້ນລຸ່ມຮອດຜູ້ນຳລ້ວນແຕ່ມີສຽງດຽວກັນ, ຄວາມເປີດອອກເປີດໃຈ, ຄວາມຫົວຄິດປະດິດສ້າງ, ຄາວມຈື່ຈຳອັນດີງາມຂອງປາຊາຊົນຈີນທົ່ວປະເທດແມ່ນ ໂລກດຽວກັນ, ຄວາມຝັນອັນດຽວກັນ "ຄຳຂວັນນີ້ປະເທດຈີນໄດ້ບັນລຸເປົ້າໝາຍແລະປາກົດຜົນເປັນຈິງແລ້ວ.

# ງານມະຫາກຳກິລາໂອລິມປິກປັກກິ່ງ ໄດ້ເຮັດໃຫ້ຄວາມຝັນຂອງຫລາຍຕໍ່ຫລາຍຄົນກາຍເປັນຄວາມຈິງ!



ທີມຈີນໄດ້ຍາດເອົາຫຼຽນຄຳກາຍຍະກຳແຂ່ງຂັນເພດຊາຍລວມໝູ່ງານໂອລິມປິກຄືນໃໝ່.
中国队重夺奥运会体操男团金牌　新华社 图




ນາງອິນຈຽນນັກກິລາແຂ່ງເຮືອໃບເພດຍິງໄດ້ຮັບຜູ້ຊະນະເລີດ,ໄດ້ບັນລຸເຖິງທັບເລກສູນແຕກຂອງຫຼຽນຄຳລາຍການປະເພດນີ້ປະກົດເປັນຈິງ
中国选手殷剑获女子帆板冠军，实现中国该项目金牌零的突破　新华社 图

## 北京奥运，让多少梦想成真

“我和你，心连心，同住地球村，为梦想，千里行，相会在北京。”唯美的旋律，天籁般的歌声，从鸟巢的上空飘扬而出。浩瀚的天穹下，全球 40 多亿观众共同聆听北京奥运会主题歌。远方的朋友携梦而来，我们一起踏梦而行。同一个世界，同一个梦想。奥林匹克，一个圆梦的圣殿！北京奥运，让多少人梦想成真！





ນາງລິວຈືກໍນັກກິລາຈີນຍາດໄດ້ຜູ້ຊະນະເລີດລາຍການລອຍນໍ້າແບບແມງກະເບື້ອ200ແມັດເພດຍິງ
中国选手刘子歌夺得北京奥运会女子 200 米蝶泳冠军，并打破世界纪录　新华社 图

"ຂ້ອຍແລະເຈົ້າ, ໃຈ ເຊື່ອມໃຈ, ຢູ່ຮ່ວມ ໂລກດຽວກັນ, ເພື່ອຄວາມຝັນ, ເດີນທາງຈາກແດນໄກ, ມາເຕົ້າໂຮມກັນຢູ່ປັກກິ່ງ." ນັ້ນແມ່ນສຽງດົນຕີແຫ່ງຄວາມອອນຊອນປະສານສຽງເພງແຫ່ງຄວາມມ່ວນຊື່ນໄດ້ດັງກ້ອງກັງວານສູ່ເທິງທ້ອງຟ້າຂອງສະໜາມກິລາຮັງນົກໃຫຍ່. ທົ່ວພື້ນພິພົບອັນກວ້າງໃຫຍ່ໄພສານ, ບັນດາຜູ້ຊົມທົ່ວໂລກ4ຕື້ກ່ວາຄົນຮ່ວມກັນງ່ຽງຫູຟັງບົດເພງແຫ່ງການເປີດງານມະຫາກຳລິລາ ໂອລິມປິກປັກກິ່ງ.

ເພື່ອນມິດແຫ່ງແດນໄກໄດ້ນຳເອົາຄວາມຝັນມາແຫ່ງນີ້, ພວກເຮົາພວມພ້ອມກັນກ້າວເດີນໄປຕາມຄວາມຝັນອັນດຽວກັນ. ຢູ່ຮ່ວມ ໂລກດຽວກັນ, ຮ່ວມຄວາມຝັນດຽວກັນ, ໂອລິມປິກນີ້ແມ່ນພິທີສັກສິດຂອງຄວາມຝັນທີ່ເປັນຈິງ!

ຄວາມຝັນຂອງຄົນໆໜຶ່ງ, ກຽດສັກສີຂອງຊາດໆໜຶ່ງ.

ການເຂົ້າຮ່ວມຂອງຄົນໆໜຶ່ງ, ຜົນສຳເລັດຂອງຄົນໆໜຶ່ງ, ລ້ວນແຕ່ແມ່ນຄວາມຝັນຂອງປະເທດໜຶ່ງແລະແມ່ນຄວາມຫວັງຂອງ ເຊື້ອຊາດໜຶ່ງທີ່ໄດ້ຝາກຝັງໄວ້ໃນນັ້ນ, ມັນໄດ້ເຕົ້າໂຮມເອົາວິຖີທາງແຫ່ງການພ້ອມກັນກ້າວສູ່ຄວາມຝັນຂອງມວນມະນຸດເປັນຄັ້ງໆມາເພື່ອກ້າວສູ່ຈິດໃຈ ໂອລິມປິກທີ່ໄວກ່ວາສູງກ່ວາແລະແຂງແຮງກ່ວາ.

ເຟວສ໌ຜູ້ໄດ້ຮັບຫລຽນ8ຫລຽນແມ່ນຄວາມອັດສະຈັນຄັ້ງໃໝ່ຂອງນັກກິລາ ໂອລິມປິກອາເມລິກາທີ່ໄດ້ບັນທຶກຢູ່ໃນງານມະຫາກຳກິລາ ໂອລິມປິກປັກກິ່ງ. ລາວກ່າວວ່າ "ນັບແຕ່ເລີ້ມຕົ້ນຝຶກແອບລອຍນໍ້າມາແຕ່ນ້ອຍ, ຂ້ອຍໄດ້ບອກຕົນເອງວ່າຂ້ອຍຈະຕ້ອງເປັນ

ນັກກິລາມືອາຊີບ, ຂ້ອຍຕ້ອງສູ້ໃຫ້ໄດ້ຫລຽນຄຳໂອລິມປິກ, ຂ້ອຍຕ້ອງທຳສະຖິຕິໂລກ. ອັນນີ້ມັນໄດ້ຊີ້ອອກໃຫ້ເຫັນແຈ້ງວ່າບໍ່ວ່າຄວາມຝັນຂອງເຈົ້າຈະສູງປານໃດ. ຈະໄກປານໃດ, ລ້ວນແຕ່ມີຄວາມສາມາດເຮັດໃຫ້ເປັນຈິງໄດ້."

ຍ້ອນວ່າມີຄວາມຝັນຈຶ່ງມີຄວາມໜ້າອັດສະຈັນກ່ຽວກັບຊີວິດເກີດຂຶ້ນ. ແພາະສະນັ້ນຄວາມຝັນຢ່າງຫລວງຫລາຍຄືຈັ່ງຊີ້ຈຶ່ງໄດ້ປ່ຽນເປັນຄວາມຈິງຢູ່ບ່ອນນີ້, ງານມະຫາກຳກິລາໂອລິມປິກປັກກິ່ງໄດ້ຕັ້ງສີລາຈາລຶກຂຶ້ນອີກແຫ່ງໜຶ່ງທີ່ມວນມະນຸດທຸ້ມສຸດຊີວິດເພື່ອຄວາມຝັນ.

ປະເທດໂຕໂກທີ່ຢູ່ອາຟຼິກກາຕາເວັນຕົກແມ່ນປະເທດນ້ອຍຊຸທີ່ມີເນື້ອທີ່ພຽງແຕ່50.000ກິໂລແມັດມົນທົນ, ນັກກິລາພາຍເຮືອດ່ຽວຂອງປະເທດນີ້ໄດ້ຮັບຫລຽນທອງແດງຂອງການແຂ່ງຂັນປະເພດນີ້. ຢືນຢູ່ເທິງແທ່ນຮັບຫລຽນລາງວັນ, ເມື່ອເວລາທຸງຊາດຂອງປະເທດຕົນຄ່ອຍໆຖືກຊັກສູງຂຶ້ນນັ້ນ, ບຸກເຝີດີເບິ່ງແລ້ວຍັງມີຄວາມຕື່ນເຕັ້ນກວ່າຜູ້ໄດ້ເປັນຮອງຊະນະເລີດອີກຊ້ຳ, ເພາະວ່າສິ່ງທີ່ລາວໄດ້ຮັບນັ້ນມັນບໍ່ພຽງແຕ່ແມ່ນຫລຽນລາງວັນຫລຽນໜຶ່ງເທົ່ານັ້ນ. ແຕ່ຫາກແມ່ນຈຸດເລີ້ມຕົ້ນຂອງປະຫວັດສາດຈຸດໜຶ່ງ---ນັ້ນແມ່ນຫລຽນລາງວັນຫລຽນທຳອິດຢູ່ໃນປະຫວັດສາດຂອງປະເທດໂຕໂກ.

ນຳມາດລີໄດ້ຍາດເອົາຫລຽນຄຳໂອລິມປິກຫລຽນທຳອິດທີ່ເປັນປະຫວັດສາດໃຫ້ແກ່ປະເທດອາເຊັກບາຍຊານໃນການແຂ່ງຂັນຢູໂດ. ລາວໄດ້ເຮັດໃຫ້ທົ່ວທັງໂລກຫວ່ຽງຫູຟັງເພງຊາດຂອງປະເທດຂອງລາວແລະແມ່ນເບິ່ງທຸງຊາດຂອງປະເທດຂອງລາວທີ່ຖືກຊັກສູງຂຶ້ນ.



ທ່ານໜາຍ ເຟພຸນັກກິລາອາເມລິການ້ຳຕານອງເຕັມເບົ້າຢູ່ໃນພິທີເບີກລາງວັນ ລາຍການລອຍນ້ຳຮັບຕໍ່ລ້ອນປະສົມ4 × 100ແມັດເພດຊາຍ
美国队选手迈・菲尔普斯在男子 4x100 米混合泳接力颁奖仪式上热泪盈眶
新华社 图



ທ່ານໄນຕັນ ຖຸບຸສິງບາຍປາກາຍເປັນຜູ້ຮັບຫຼຽນຄຳຜູ້ທຳອິດໃນງານໂອລິມປິກຂອງປະເທດມົງໂກນ
奈丹・图布辛巴亚尔成为蒙古国首位奥运金牌得主　新华社 图

ວັນທີ 11 ສິງຫາໃນເວລາທີ່ປີນເຄີລາກ້າວຂຶ້ນສູ່ແທ່ນຮັບຫລຽນລາງວັນຊະນະເລີດຍິງປືນ,ທົ່ວທັງປະເທດອິນເດຍແມ່ນມີຄວາມຟົດຟື້ນຂຶ້ນຢ່າງໃຫຍ່.ມາຕຸພູມຂອງລາວໄດ້ລໍຄອຍສິ່ງດັ່ງກ່າວມາໄດ້88ປີແລ້ວ!ປະທານາທິບໍດີພາເດຍໄດ້ຍ້ອງຍໍປີນເຄີລາວ່ານັ້ນແມ່ນຄວາມພາກພູມໃຈຂອງປະເທດອິນເດຍ,ເຊິ່ງໄດ້ເຮັດໃຫ້ຄວາມຝັນຂອງປະຊາຊົນອິນເດຍ1ຕື້100ລ້ານຄົນກາຍເປັນຄວາມຈິງ.

ຄວາມຝັນຂອງຄົນໆໜຶ່ງແລະກຽດສັກສີຂອງປະເທດໆໜຶ່ງໄດ້ເຊື່ອມຕົວເປັນອັນດຽວກັນຢູ່ໃນງານມະຫາກໍາກິລາໂອລິມປິກແຫ່ງນີ້!

ຖ້າເວົ້າເຖິງນາຍດານຕູຊິນບາຢາຣ,ໃນວັນທີ 14 ສິງຫາແຮ່ງແມ່ນຄໍ່າຄືນລ້າຍຄືຄວາມຝັນ!ລາວໄດ້ກາຍເປັນຜູ້ຄອບຄອງຫລຽນຄໍາໂອລິມປິກຜູ້ທໍາອິດຂອງປະເທດມົງໂກນ!ນັກຂ່າວມົງໂກນຜູ້ໜຶ່ງໄດ້ເວົ້າສູ່ລາວຟັງວ່າ:"ດຽວນີ້ຢູ່ຕາມເສັ້ນທາງນ້ອຍໃຫຍ່ທົ່ວທັງມົງໂກນແມ່ນເຕັມໄປດ້ວຍຜູ້ຄົນທີ່ອອກມາຊົມເຊີຍເຈົ້າ!"ນັບແຕ່ປີ1964ທີ່ເຂົ້າຮ່ວມກິລາໂອລິມປິກເປັນຕົ້ນມາ,ຄວາມຝັນຫລຽນຄໍາ44ປີໃນທີ່ສຸດໄດ້ກາຍເປັນຄວາມຈິງແລ້ວ,ຄົນມົງໂກນຈະຈົດຈໍາຊື່ສຽງຮຽງນາມຂອງວິລະຊົນຜູ້ນີ້ໄປຕະຫລອດການ.

ທຸກຫຼຽນຄໍາທີ່ໄດ້ຮັບ,ທຸກເທື່ອທີ່ທຸງ5ດາວແດງຖືກຊັກຂຶ້ນແມ່ນໄດ້ດຶງເອົາທຸກຄວາມບາກບັ່ນແລະຄວາມປິຕິຍິນດີຂອງນັກກິລາຈີນຈໍານວນບໍ່ໜ້ອຍໃນເສັ້ນທາງແຫ່ງການຕາມຫາຄວາມຝັນ.

ວັນທີ10ສິງຫາ,ຈາງຫລິນນັກລອຍນໍ້າທີ່ມີຊື່ສຽງຂອງປະ




ຈັບລໍາໄມ້ເຕັ້ນສູງເພດຍິງ: ນາງອີສິນບາເຢຽນັກກິລາລັດເຊຍໄດ້ສ້າງສະຖິຕິໃໝ່ຂອງໂລກ
女子撑杆跳高 ：俄罗斯选手伊辛巴耶娃创造新的世界纪录　新华社 图



ທ່ານເອີລູເອີ ມະມາເຕີລີໄດ້ຮັບຫຼຽນຄໍາປະຖົມມະເລີກລາຍການຢູໂດໃນປະຫວັດສາດງານໂອລິມປິກຂອງອາເຊບາຍຊານ
叶尔努尔 · 马马德利在柔道比赛中，为阿塞拜疆赢得奥运会历史上的首枚金牌
新华社 图



ກາຍຍະກຳສິລະປະ--ລັດເຊຍຍາດໄດ້ແຊັມໂລກລວມໝູ່ທຸກປະການ
艺术体操——俄罗斯夺冠集体全能决赛 新华社 图

ເທດຈີນໄດ້ຮັບຫລຽນເງິນໃນລາຍການລອຍນ້ຳແບບຟຼີສະຕາຍ 400ແມັດ,ເຊິ່ງເປັນຜູ້ທຳອິກຂອງນັກກິລາລອຍນ້ຳຊາຍຈີນທີ່ສາມາດທັບເລກສູນແຕກຢູ່ໃນຕາຕະລາງຫລຽນລາງວັນໂອລິມປິກປະເພດນີ້.

ວັນທີ 12 ສິງຫາຈຸງໝານຍາດໄດ້ຊະນະເລີດໃນກິລາຟັນດາບຊາຍດ່ຽວ,ເຊິ່ງເປັນການລໍຄອຍເປັນໄລຍະຍາວນານ 24ປີ ນັບແຕ່ປີ 1984 ເຖິງປີ 2008,ໃນທີ່ສຸດປະເທດຈີນໄດ້ຂຽນປະຫວັດສາດໜ້າໃໝ່ພົ້ນເດັ່ນຂຶ້ນຢູ່ໃນເວທີຂອງກິລາຟັນດາບ.

ວັນທີ13ສິງຫາໃນການແຂ່ງຂັນເປັນກຸ່ມກິລາກິມນາດສະຕິກເພດຍິງ,ກຸ່ມຂອງປະເທດຈີນສາມາດເອົາຊະນະກຸ່ມຂອງປະເທດອາເມລິກາ,ເຊິ່ງໄດ້ຮັບຫລຽນຄຳໂອລິມປິກປະເພດເປັນກຸ່ມເທື່ອທຳອິດໃນປະຫວັດສາດຂອງກິລາກິມນາດສະຕິກຂອງຈີນ.

ວັນທີ14ສິງຫາຈາງຈອນຈອນນັກກິລາຈີນເຂົ້າຮ່ວມແຂ່ງຂັນກິລາຍິງທະນູປະເພດຍິງດ່ຽວສາມາດຍາດໄດ້ຫລຽນຄຳ,ເຊິ່ງໄດ້ສ້າງການທະລຸເປົ້າທີ່ມີລັກສະນະປະຫວັດສາດໃນການແຂ່ງຂັນຍິງທະນູໂອລິມປິກຂອງຄະນະນັກກິລາຈີນ.

ວັນທີ15ສິງຫາໃນການແຂ່ງຂັນສອງຂັ້ນຂອງນັກກິລາຍິງປະເພດ75ກິໂລແລະຊາຍປະເພດ85ກິໂລ,ແມ່ນຈາວລູຍແລະລູ້ຢົງໄດ້ຊະນະເລີດໄລ່ເລັ່ຍກັນ.ຈາວລູຍໄດ້ຊ່ວຍໃຫ້ນັກຍົກນ້ຳໜັກຂອງຈີນໄດ້ຮັບຫລຽນຄຳໂອລິມປິກປະເພດດັ່ງກ່າວເປັນເທື່ອທຳອິດ,ທັງໄດ້ເຮັດໃຫ້ນັກຍົກນ້ຳໜັກໂອລິມປິກຈີນໄດ້ຮັບຫລຽນລາງວັນໃນປະເພດຕ່າງໆ "ທະລຸເປົ້າຢ່າງພໍອົກພໍໃຈ";ລູ້ຢົງໄດ້ເປັນຜູ້ປ່ຽນແປງປະຫວັດສາດຂອງກິລາຍົກນ້ຳໜັກໂອລິມປິກປະເພດໃຫຍ່ຂອງຈີນທີ່ຜ່ານມາບໍ່ເຄີຍໄດ້ຮັບຫລຽນຈັກເທື່ອ.

ວັນທີ20ສິງຫາກິລາເຮືອໃບລົມໂອລິມປິກປັກກິ່ງເພດຍິງປະເພດ RS ມີການແຂ່ງຂັນຂັ້ນ X ຍາດເອົາຫລຽນຄຳ,ນັກກິລາຈີນອິນຈ້ຽນຍາດໄດ້ຊະນະເລີດ,ສາມາດສ້າງຄວາມເປັນຈິງໃນການທັບເລກສູນແຕກຢູ່ໃນຕາຕະລາງຫລຽນຄຳຂອງກິລາປະເພດດັ່ງກ່າວ.

ເລີ້ມນັບຈາກສູນ,ເລີ້ມກ້າວຈາກຄວາມຫລ້າຫລັງຕ່ຳຕ້ອຍ,ນັກກິລາຂອງປະເທດຈີນໄດ້ລຳບາກກາກກຳ ຊອກຫາເສັ້ນທາງຄວາມຝັນໃນກິລາໂອລິມປິກ,ກ້າວສູ່ຄວາມໃຝ່ຝັນເພື່ອບັນລຸໃຫ້ໄດ້ການທະລຸເປົ້າໝາຍ.

ໃນຄວາມຈິງແລ້ວບໍ່ພຽງແຕ່ແມ່ນກຳລັງທັບກິລາຂອງປະເທດຈີນ,ຢູ່ເທິງສະໜາມແຂ່ງຂັນຂອງງານກິລາໂອລິມປິກ.ນັກກິລາທັງໝົດທີ່ຕາງໜ້າໃຫ້ຄະນະຜູ້ແທນ204ຄະນະ,ໃນທຸກເວ

ລານາທີ່ແມ່ນລ້ວນແຕ່ພວມສ້າງປະຫວັດສາດໜ້າໃໝ່,ລ້ວນແຕ່ພວມຢູ່ໃນສະໜາມແຂ່ງຂັນສະແຫວງຫາຄວາມໃຝ່ຝັນສູງສຸດຮ່ວມກັນມວນມະນຸດ.

ຫລິວຈຸນຫົງຜູ້ຄອງຊະນະເລີດນັກກິລາຍົກນ້ຳໜັກຍິງປະເພດ 69 ກິໂລໄດ້ເຂົ້າຮອບສຸດທ້າຍທັງໄດ້ທຳສະຖິຕິໂລກ 3 ລາຍການຂອງການແຂ່ງຂັນດັ່ງກ່າວ!ໄດ້ກາຍເປັນຜູ້ຊະນະເລີດແລ້ວ.ຍ້ອນຫຍັງລາວຈຶ່ງຍັງຕ້ອງຍົກແລ້ວຍົກອີກ?ລາວເວົ້າວ່າ: "ນັ້ນແມ່ນຂ້ອຍຄຶດຢາກທ້າທາຍຕໍ່ຂ້ອຍເອງ,ເພື່ອບື້ນກາຍຂີດຈຳກັດຂອງຕົນເອງລອງເບິ່ງ".

ເໜືອຂີດຈຳກັດ!ຄວາມຝັນເໜືອຂີດຈຳກັດ!ກິລາໂອລິມປິກໄດ້ສ້າງຟ້າດິນທີ່ເປີດກ້ວາງແລະກ້ວາງຂຶ້ນ,ຄົນທັງມວນພ້ອມກັນສະແຫວງຫາຄວາມຝັນຢູ່ພາຍໃຕ້ຜືນທຸງໂອລິມປິກຮູບວົງມົນຫ້າຫ່ວງເພື່ອແບ່ງປັນຄວາມມ່ວນຊື່ນຮ່ວມກັນ.ບໍ່ວ່າຫລຽນລາງວັນຈະເປັນແນວໃດ,ບໍ່ວ່າຈະມີຫລຽນລາງວັນຫລືບໍ່,ຊື່ສຽງຮຽງນາມຂອງພວກເຂົາລ້ວນແຕ່ຖືກເຊື່ອມຕິດເຂົ້າກັນກັບຄວາມພາກພູມໃຈຂອງຊີວິດແລະກຽດຊື່ສຽງຂອງປະເທດຊາດ.ເພື່ອຄວາມຝັນພວກເຂົາໄດ້ພ້ອມພຽງຮຽງໜ້າກັນຢືນຢູ່ຈຸດພິກັດປະຫວັດສາດອັນດຽວກັນຄື---ເທິງສະໜາມແຂ່ງຂັນກິລາໂອລິມປິກປັກກິ່ງ.

ງານກິລາໂອລິມປິກແມ່ນບຸນປາງໃຫຍ່ຂອງມວນມະນຸດທີ່4ປີໃດມີເທື່ອໜຶ່ງ.

ຮ້ອຍປີແຫ່ງຄວາມລຳບາກຍາວນານ,ປັກກິ່ງຂອງປະເທດຈີນໃນທີ່ສຸດກໍ່ໄດ້ຮັບຕ້ອນງານມະຫາກຳກິລາໂອລິມປິກ.ການຈັດຕັ້ງງານກິລາໂອລິມປິກໄດ້ເຮັດໃຫ້ຄວາມຝັນອັນຮຸ່ງເຮືອງຂອງ



ທ່ານຈາງນິນນັກກິລາຈີນ(ທາງໜ້າ)ຍາດໄດ້ຫຼຽນເງິນລາຍການລອຍນ້ຳເສລີເພດຊາຍໃນງານກິລາໂອລິມປິກປັກກິ່ງ.ອັນນີ້ແມ່ນຫຼຽນໄຊລອຍນ້ຳປະຖົມມະເລີກຂອງຈີນທີ່ໄດ້ຮັບຢູ່ງານໂອລິມປິກ

中国选手张琳（前）在北京奥运会男子 400 米自由泳获得银牌，这是中国男子运动员在奥运会上获得的首枚游泳奖牌　新华社 图



ທ່ານມາກທີຢາ ສີໄຫນານັກກິລາເຢຍລະມັນມືຈັບຫຼຽນຄໍາ,ດອກໄມ້ແລະຮູບຖ່າຍຂອງເມັຍ

德国选手马蒂亚斯 · 施泰纳在领奖台上手持金牌、鲜花和妻子的照片　新华社 图

ຄົນຈີນ1.300ລ້ານຄົນປະກົດເປັນຈິງ.

ສອງເທື່ອສະຫມັກຂໍຈັດງານ,7ປີກະກຽມ,ຜູ້ຄົນນັບຈໍານວນບໍ່ຖ້ວນທີ່ມັກຮັກວຽກງານກິລາໂອລິມປິກໄດ້ທຸ້ມເທກາຍໃຈເຂົ້າສູ່ວຽກງານດັ່ງກ່າວ,ເຊິ່ງໄດ້ຮ່ວມແຮງຮ່ວມໃຈກັນກໍ່ສ້າງຟ້າດິນແຫ່ງຄວາມຝັນຂອງງານກິລາໂອລິມປິກປັກກິ່ງຂື້ນມາ.

ໃນເວລາກະກຽມຈັດງານກິລາໂອລິມປິກ 7 ປີນັ້ນ,ນັກກໍ່ສ້າງຈໍານວນຫລວງຫລາຍໄດ້ດໍາເນີນວຽກງານຢ່າງອົດທົນພາກພຽນເພື່ອຄວາມຝັນໂອລິມປິກປັກກິ່ງ.ໃນເວລາທີ່ສະຫນາມກິລາໂອລິມປິກທີ່ທັນສະໄຫມຈໍານວນຫນຶ່ງເປັນຕົ້ນແມ່ນ"ສະຫນາມກິລາຮູບຮັງນົກ"ແລະ"ສະຫນາມກິລາຮູບກ້ອນນໍ້າ"ໄດ້ປະກົດຂື້ນຢູ່ປັກກິ່ງແລະສະຫນາມກິລາອື່ນໆຢູ່ເມືອງອື່ນຂອງຈີນນັ້ນ,ພວກມັນຈຶ່ງແມ່ນສວຍງາມເຂົ້າກັນພໍດີບພໍດີພໍປານຜູ້ເຂົ້າຮ່ວມງານກິລາໂອລິມປິກຈໍານວນມະຫາສານໄດ້ສ້າງຄວາມຝັນແຫ່ງຈິນຕະນາການຢູ່ໃຕ້ທ້ອງຟ້າສີຄາມແລະເມກເຟືອສີຂາວ.

ມື້ນີ້ແມ່ນມື້ທີ່ຍິ່ງໃຫຍ່,ເຊິ່ງຍາກທີ່ສຸດທີ່ຂ້ອຍຈະລືມມັນໄດ້ໃນຊີວິດຂອງຂ້ອຍ,ຂ້ອຍຖືກມອບຫມາຍໃຫ້ເປັນຜູ້ກໍາກັບລວມໃນພິທີເປີດງານມະຫາກໍາກິລາໂອລິມປິກນັ້ນແມ່ນຄວາມຝັນແລະກຽດຕິຍົດອັນສູງສົ່ງຫາອັນປຽບບໍ່ໄດ້ໃນຊີວິດປັ້ນຫນຶ່ງຂອງຜູ້ເຮັດວຽກງານກ່ຽວກັບສິລະປະກໍາຜູ້ຫນຶ່ງ"ນັ້ນແມ່ນຄໍາເວົ້າຂອງຈາງອີ້ໂມ,ເຊິ່ງໄດ້ມີຄວາມຮູ້ສຶກຕື່ນເຕັ້ນໃນເວລາຖືກມອບຫມາຍໃຫ້ເປັນຜູ້ກໍາກັບລວມການສະແດງໃນພິທີເປີດງານກິລາໂອລິມປິກປັກກິ່ງ,ເຊິ່ງນັ້ນມັນກໍ່ໄດ້ຖ່າຍທອດຄວາມໃນໃຈຂອງຜູ້ເຂົ້າຮ່ວມງານກິລາໂອລິມປິກຈໍານວນຫລວງຫລາຍເຊັ່ນນັ້ນອອກມາ.

ຈາງອີ້ໂມກ່າວວ່າ:ລາວມັກທີ່ສຸດຄໍາຂວັນທີ່ເປັນຄໍາຂວັນຫລັກຂອງງານກິລາໂອລິມປິກຄັ້ງນີ້ທີ່ວ່າ"ຮ່ວມໂລກດຽວກັນ,ຮ່ວມຄວາມຝັນດຽວກັນ".ສິ່ງນີ້ມັນແມ່ນຄວາມມຸ້ງມາດປາດຖະຫນາອັນຫນຶ່ງ,ແມ່ນຄວາມໃຈກ້ວາງອັນຫນຶ່ງ,ມັນແມ່ນຄວາມເອື້ອເຟື້ອເພື່ອແຜ່ເຂົ້າໃຈກັນອັນຫນຶ່ງ,ມັນແມ່ນຄວາມເຊື່ອໃຈຕົນເອງອັນຫນຶ່ງແລະມັນແມ່ນຄວາມກ້າຫານຊານໄຊອັນຫນຶ່ງ!"ຄວາມຝັນ--ຄໍາສັບຄໍານີ້ແມ່ນເຮັດໃຫ້ຄົນເຮົາມີຈິນຕະນາການແຫ່ງຄວາມສຸກ.ຄວາມຝັນຂອງຂ້ອຍກໍ່ແມ່ນຢາກຖືເອົາເວທີອັນຍິ່ງໃຫຍ່ແຫ່ງງານກິລາໂອລິມປິກຄັ້ງນີ້ເຮັດໃຫ້ທົ່ວທັງໂລກມະນຸດຮັບຮູ້ເຖິງຄວາມມີບັນຍາກາດແຫ່ງຄວາມສຸກແລະໂລແມນຕິກຂອງປະເທດຈີນ".

ພິທີເປີດງານມະຫາກໍາກິລາໂອລິມປິກປັກກິ່ງໄດ້ພິສູດໃຫ້ເຫັນແລ້ວວ່າຄວາມຝັນຂອງຈາງອີ້ໂມແລະທີມງານທັງຫມົດຂອງ

ລາວໄດ້ກາຍເປັນຄວາມຈິງແລ້ວ.

ຊາລາບູໄລມານກ່າວວ່າ:ນັ້ນແມ່ນ "ເທບທິດາແສງຈັນ" ທີ່ເປັນບົດເພງໄດ້ຮ້ອງຢູ່ໃນພິທີເປີດງານກິລາໂອລິມປິກບາເຊໂລນາປີ 1992,ຫລັງຈາກນັ້ນມາ 16 ປີ,ບົດເພງໄດ້ດັງກ້ອງກັງວານຈາກປະເທດທີ່ເກົ່າແກ່ເບື້ອງຕາເວັນອອກໄປສູ່ທົ່ວພິພົບ. "ຂ້າພະເຈົ້າມີປະສົບການໃນການເຂົ້າຮ່ວມງານສະແດງຂະໜາດໃຫຍ່ຈຳນວນຫລວງຫລາຍຢູ່ທົ່ວໂລກ,ແຕ່ວ່າເມື່ອຂ້າພະເຈົ້າຢືນຢູ່ເທິງ "ໜ່ວຍໂລກ" ທີ່ຄ່ອຍໆສູງຂຶ້ນນັ້ນ,ໃນເວລາແນມເຫັນເວທີຍິ່ງໃຫຍ່ອະລັງການຂອງ "ຮັງນົກ" ກໍ່ບໍ່ສາມາດຫ້າມນ້ຳຕາບໍ່ໃຫ້ມັນໄຫລອອກມາໄດ້!ຂ້າພະເຈົ້າບໍ່ເຄີຍຄິດມາກ່ອນເລີຍວ່າຄວາມຝັນໃນການສະແດງຮ້ອງເພງເປີດງານໂອລິມປິກປັກກິ່ງໄດ້ກາຍເປັນຄວາມຈິງແລ້ວ."

ຈາກ 18 ປີກ່ອນທີ່ສະແດງຮ້ອງເພງ "ສາຍລົມແຫ່ງອາຊີ" ໃນພິທີເປີດງານກິລາເອຊຽນເກມຈົນເຖິງການສະແດງຮ້ອງເພງ "ຂ້ອຍແລະເຈົ້າ" ຄັ້ງນີ້,ຫລິວຮວນໄດ້ກ່າວອອກມາດ້ວຍຄວາມຕື່ນຕັນໃຈວ່າ: "ຮ້ອງເພງເປີດງານກິລາໂອລິມປິກແມ່ນຄວາມໃຝ່ຝັນຂອງນັກຮ້ອງເພງທຸກຄົນ.ການປ່ຽນແປງໃນ 18 ປີຂອງປະເທດຈີນທຽບໃສ່ກັບຮ້ອຍປີກ່ອນແມ່ນໃຫຍ່ຫລວງຫລາຍ,ດົນຕີເບິ່ງຈາກອີກແງ່ມູມໜຶ່ງແມ່ນສາມາດເຫັນເຖິງແລະເປັນຕົວແທນແຫ່ງຄວາມຮູ້ສຶກໃນໃຈຂອງພວກເຮົາໄດ້."

ໃນພິທີເປີດງານ,ຄຽງຄູ່ກັບການຄ່ອຍໆເປີດແຜ່ນກໍ້ຮູບໃຫຍ່ທີ່ມີສີສັນອອກມາຢູ່ກາງສະໜາມກິລານັ້ນ,ຫລີໜິງຜູ້ຖືທອນໄຟໂອລິມປິກຜູ້ທີ28888ໄດ້ໃຕ້ແປວໄຟໃສ່ເສົາທອນໄຟໃຫຍ່ຂອງງານກິລາໂອລິມປິກປັກກິ່ງ.ສາຍຕາພວກເຮົາແມ່ນແນມນຳບາດກ້າວເດີນຢ່າງຊ້າໆຢູ່ກາງເວຫາຂອງຜູ້ຖືທອນໄຟຜູ້ນີ້ຜູ້ທີ່ເຄີຍເປັນລາຊາແຫ່ງກິມນາດສະຕິກມາແລ້ວ.ຫລີໜິງເວົ້າວ່າ "ຂ້ອຍແມ່ນຜູ້ຕາງໜ້າໃຫ້ທຸກຄົນເພື່ອໄປໃຕ້ໄຟນັ້ນ,ນີ້ແມ່ນຄວາມຟົດຟື້ນໂອລິມປິກໃນຮ້ອຍປີຂອງນັກກິລາຈີນທຸກຄົນ,ເຊິ່ງໄດ້ຮວມກຳລັງຂອງຄົນຈີນພວກເຮົາ1300ລ້ານຄົນເຂົ້າກັນ.ພາຍຫລັງການຈູດໄຟໂອລິມປິກແລ້ວໄດ້ເກີດມີຄວາມຮູ້ສຶກທີ່ຮ້ອນແຮງແນວໜຶ່ງຄື:ນີ້ແມ່ນກຳລັງແຫ່ງຄວາມໃຝ່ຝັນຂອງຈີນ."



ນັກກິລາບານບ້ວງອາເມລິກາເອົາຫຼຽນຄຳຫ້ອຍໄວ້ໃສ່ຄໍຂອງຄູຝຶກຫັດ
美国篮球队球员将金牌挂在主教练脖子上　新华社 图

ທ່ານຊາກຣົກເກປະທານຄະນະກຳມະການໂອລິມປິກສາກົນເຄີຍເວົ້າວ່າ:ງານກິລາໂອລິມປິກແມ່ນປາງບຸນໃຫຍ່ຂອງນັກກິລາ,ພ້ອມດຽວກັນກໍແມ່ນປາງບຸນໃຫຍ່ຂອງຜູ້ອາສາສະໝັກ. ປາຍສຽວຫລຸງຈາກມະຫາວິທະຍາໄລປັກກິ່ງແມ່ນຜູ້ໜຶ່ງໃນຈຳນວນອາສາສະໝັກທີ່ມີຈຳນວນເປັນລ້ານຄົນນັ້ນ,ລາວໄດ້ຮັບໃຊ້ຢູ່ໃນຮັງນົກ,ລາວເວົ້າວ່າ: "ການເປັນອາສາສະໝັກໄດ້ເຮັດໃຫ້ຄວາມຝັນຂອງຂ້ອຍປະກົດເປັນຈິງ. ສາມາດນຳເອົາຊີວິດຂອງຕົນປະປົນເຂົ້າສູ່ຊີບພະຈອນຊີວິດຂອງປະເທດຊາດ,ເມື່ອຄຶດທວນຄືນຍາມໃດແມ່ນມີຄວາມພາກພູມໃຈທີ່ສຸດໃນຊີວິດນີ້."

ໃນເວລາງານມະຫາກຳກິລາໂອລິມປິກປັກກິ່ງທົ່ວທັງໂລກແມ່ນມ່ວນຊື່ນກັບຄວາມຝັນທີ່ເປັນຈິງ.

ວັນທີ08/08/2008,ໂອລິມປິກໄດ້ມາເຖິງປະເທດທີ່ມີພົນລະເມືອງ1/5ຂອງໂລກ. ງານກິລາໂອລິມປິກປັກກິ່ງພວມສ້າງຄວາມອັດສະຈັນແຫ່ງປະຫວັດສາດໜ້າໃໝ່,ພິທີເປີດງານທີ່ເປັນເລີດຍອດຢ້ຽມແລະການແຂ່ງຂັນທີ່ເປັນກະແສສູງໄດ້ເຮັດໃຫ້ "ເວລາປັກກິ່ງ" ກາຍເປັນເວລາໂອລິມປິກທີ່ຄົນທົ່ວໂລກພາກັນມ່ວນຊື່ນ.

ຢູ່ເຖິງບ່ອນນັ່ງແຂກສຳຄັນຂອງ "ສະໜາມຮັງນົກ",ພິທີເປີດງານກິລາໂອລິມປິກປັກກິ່ງມີຜູ້ນຳສຳຄັນຂອງຕ່າງປະເທດເກືອບໜຶ່ງຮ້ອຍທ່ານໄດ້ແບ່ງປັນຄ່ຳຄືນປັກກິ່ງແຫ່ງຄວາມງົດງາມຮ່ວມກັນ,ນີ້ແມ່ນໃນປະຫວັດສາດຂອງງານກິລາໂອລິມປິກຊຸທີ່ມີຂະບວນສະໜາມຂະໜາດໃຫຍ່ມະໂຫລານແລະລະດັບຊັ້ນທີ່ສູງທີ່ສຸດ.

ໃນວັນທີ 11 ສິງຫາ,ທ່ານບຸດປະທານາທິບໍດີອາເມລິກາທີ່ເຂົ້າຮ່ວມພິທີເປີດງານກິລາໂອລິມປິກແລະເຂົ້າຊົມບາງສະໜາມແຂ່ງຂັນໄດ້ກ່າວວ່າງານກິລາໂອລິມປິກປັກກິ່ງເຮັດໄດ້ດີລື່ນຄວາມຄາດໝາຍທີ່ທ່ານຄິດໄວ້,ເພິ່ນບໍ່ອາດລືມ "ປະສົບການສຸດທີ່ເຮັດໃຫ້ຄົນຝົດຝື້ນຄັ້ງນີ້ໄດ້,ເຊິ່ງສິ່ງນີ້ແມ່ນຄວາມມີສະເໜ່ທີ່ຄົງຢູ່ໃນງານກິລາໂອລິມປິກແລະມັນໄດ້ນຳເອົາຄວາມສຸກມ່ວນຊື່ນຢ່າງຫລວງຫລາຍມາສູ່ຄົນເຮົາ." ຜູ້ຊົມທາງໂທລະພາບຂອງອາເມລິກາທີ່ຢູ່ເບື້ອງຝັ່ງມະຫາສະມຸດອັດລັງຕິກກໍມີຄວາມຝົດຝື້ນເຊັ່ນດຽວກັນ,ອັດຕາຂອງຜູ້ຊົມໄດ້ສ້າງສະຖິຕິສູງ



ນັກກິລາກາຍຍະກຳເພດຍິງຈີນເຊັ່ນ:ເຊີນເຟີຍ,ຢາງອີລິນ,ລີຊັນຊັນ,ຫໍໂຄຊິນ,ຈຽງຢີຢວນ,ຕົ້ນລິນໆ(ນັບແຕ່ຊ້າຍ)ສະຫຼອງໄຊຢູ່ໃນພິທີເປີກລາງວັນ

中国女子体操队队员程菲、杨伊琳、李珊珊、何可欣、江钰源和邓琳琳（左起）在颁奖仪式上庆祝　新华社 图

ສຸດຂອງການຈັດງານກິລາໂອລິມປິກທີ່ຢູ່ນອກດິນແດນອາເມລິກາ.

ເນື່ອງຈາກວ່າຝຣັ່ງແລະຈີນມີຄວາມແຕກຕ່າງກັນຂອງເວລາເຖິງ6 ຊົ່ວໂມງ,ຈຶ່ງເຮັດໃຫ້ຜູ້ຊົມຂອງປະເທດຝຣັ່ງຈຳນວນບໍ່ໜ້ອຍເລືອກທີ່ຈະ "ທຸກ" ກັບການອົດຫລັບອົດນອນເພື່ອຊົມແລະມ່ວນຊື່ນກັບການແຂ່ງຂັນກິລາ. ວັນທີ14ສິງຫາໄດ້ຈັດໃຫ້ມີການແຂ່ງຂັນຮອບຊະນະເລີດກິລາລອຍນ້ຳຊາຍແບບຟຼີສະຕາຍ100ແມັດ,ແບກນາຈາກທີມນັກກິລາຝຣັ່ງແມ່ນຜູ້ຊີງເອົາຫລຽນຄຳທີ່ຜູ້ຊົມໃຫ້ຄວາມສົນໃຈທີ່ສຸດ,ໃນມື້ນັ້ນປະຊາຊົນຝຣັ່ງເກືອບ290.000ຄົນໄດ້ຊົມການຖ່າຍທອດການແຂ່ງຂັນຢູ່ຝຣັ່ງໃນເວລາປະມານ3ໂມງເຊົ້າ.

ຮ້ານບາເຫລົ້າຂອງສະໜາມກິລາທີ່ມີຊື່ສຽງຂອງນິວຢອກຢູ່ຖະໜົນແລນສະເດີນໃນໄລຍະຫລັງໆນີ້ແມ່ນມີຄວາມຝົດຝື້ນ

ເປັນພິເສດ. ອີງຕາມຄຳເວົ້າຂອງທ່ານຈອດປຜູ້ຈັດການຂອງບາເຫຼົ້າແຫ່ງນີ້ບອກວ່າປົກກະຕິໃນເດືອນ 7 ແລະເດືອນ 8 ນີ້ແມ່ນເວລາທີ່ຄົນອາເມລິກາອອກໄປພັກຜ່ອນຢ່ອນໃຈຢູ່ນອກເມືອງ, ທຸລະກິດຂອງຮ້ານເຫຼົ້າບາຈຶ່ງບໍ່ຄ່ອຍຈະດີປານໃດ, ແຕ່ດຽວນີ້ຍ້ອນວ່າງານໂອລິມປິກກຳລັງເຂັ້ມຂຸ້ນຈຳນວນຜູ້ຄົນທີ່ຜ່ານໄປມາໃນແຖວຖະໜົນແລນສະເດີນກໍ່ເພີ່ມຂຶ້ນຕາມສະພາບຄວາມຄຶກຄື້ນຂອງການຊົມການແຂ່ງຂັນກິລາໂອລິມປິກ.

ແສງໄຟເປັນຈຸດໆຈາກຖະໜົນໃຫຍ່ແຄມແມ່ນ້ຳທີ່ສ່ອງສະທ້ອນລົງໃສ່ກາງແມ່ນ້ຳນິນ(nile), ຮ້ານອາຫານແລະບາເຫຼົ້າແຄມແມ່ນ້ຳເຫຼົ່ານັ້ນນັບແຕ່ການເປີດງານກິລາໂອລິມປິກເປັນຕົ້ນມາໄດ້ກາຍເປັນສະຖານທີ່ທີ່ດີສຳລັບຄົນທົ່ວໄປທີ່ມາເຕົ້າໂຮມກັນເບິ່ງການແຂ່ງຂັນກິລາໂອລິມປິກ. ຊາວໜຸ່ມຈຳນວນຫຼາຍຫຼັງຈາກເລີກການແລ້ວກໍໄປສູ່ຮ້ານກາເຟແຄມແມ່ນ້ຳນິນນີ້ເລີຍ, ໝູ່ຄູ່ເປັນກຸ່ມ 3 ເຖິງ 5 ຄົນຊຸມນຸມຢູ່ນຳກັນ, ທັງໂອ້ລົມກັນທັງເບິ່ງການແຂ່ງຂັນກິລາໂອລິມປິກ, ເຊິ່ງໄດ້ກາຍເປັນແບບວິຖີການພັກຜ່ອນຊະນິດໜຶ່ງທີ່ນິຍົມກັນ.

ຕອນຄ່ຳຂອງວັນທີ 17 ສິງຫາຢູ່ສະໜາມຫຼວງຊິງຊີຈອນກາງກຸງໂຊນຂອງສ. ເກົາຫຼີແມ່ນມີທັງສຽງກອງສຽງຮ້ອງໂຮມ່ວນຊື່ນຢ່າງບໍ່ຢຸດເຊົາ. ຊາວເມືອງໂຊນຫຼາຍກວ່າ 5000ຄົນໄດ້ເຕົ້າໂຮມກັນຢູ່ຕໍ່ໜ້າໂທລະທັດຈໍໃຫຍ່ທີ່ຄະນະກຳການໂອລິມປິກຂອງກຸງໂຊນຕັ້ງຂຶ້ນຢູ່ສະໜາມຫຼວງຊິງຊີຈອນ, ພວກເຂົາແຂ່ງຟັນຊົມການຖ່າຍທອດການແຂ່ງຂັນນັດທຳອິດກິລາເບດສະບອນເພດຊາຍລະຫວ່າງທີມຈີນກັບທີມສ. ເກົາຫຼີ, ເພື່ອເຊຍໃຫ້ກຳລັງໃຈແກ່ນັກກິລາຂອງສ. ເກົາຫຼີ. ສ່ວນທາງດ້ານຂ້າງກັນແມ່ນກຳແພງອະທິຖານທີ່ສ້າງຂຶ້ນກ່ອນພິທີໄຂງານໂດຍຄະນະກຳມະການກິລາໂອລິມປິກ, ເຊິ່ງທັງ 3 ຊັ້ນໃນແລະ 3 ຊັ້ນນອກກຳແພງລ້ວນແຕ່ໄດ້ມີຄົນມັດເສັ້ນດ້າຍສີແດງແລະສີນ້ຳໜານາກກ້ຽງໃສ່ເຕັມໝົດແລ້ວ, ນັ້ນແມ່ນເພື່ອອວຍພອນງານກິລາໂອລິມປິກ.

ໃນຫຼາຍມື້ຕິດຕໍ່ກັນນີ້, ຮ້ານເຫຼົ້າບາ, ຊຸບເປີມາເກັດແລະຮ້ານອາຫານຫຼາຍແຫ່ງຢູ່ບາງກອກປະເທດໄທລ້ວນແຕ່ໄດ້ປະກົດມີສະຖານທີ່ເພື່ອຊົມການແຂ່ງຂັນກິລາໂອລິມປິກ, ເຊິ່ງເປັນສະຖານທີ່ທີ່ມີຄວາມຟົດເດືອດ, ສຽງມ່ວນຊື່ນໂຮແຊວເຕັມໄປໝົດທົ່ວບໍລິເວນນັ້ນ. ນັບແຕ່ມື້ເປີດງານກິລາໂອລິມປິກປັກກິ່ງເປັນຕົ້ນມາ, ສະຖານນີໂທລະພາບແຫ່ງຊາດຂອງໄທທີ່ເປັນສະຖານີດຽວໄດ້ຮັບສິດສິ່ງສັນຍານຖ່າຍທອດໃຫ້ສະຖານນີອື່ນໃນສື່ມວນຊົນໄທແມ່ນໄດ້ຮັບການຂານຕອບດ້ວຍອັດຕາທີ່ເພີ່ມຂຶ້ນຂອງຜູ້ຊົມຢ່າງລົ້ນເຫຼືອ. ອີງຕາມຄຳເວົ້າຂອງນັກຈັດລາຍການຜູ້ໜຶ່ງໃນລາຍການກິລາໂອລິມປິກກ່າວວ່າ: "ເດືອນສິງຫາແມ່ນຖືກລິຂິດໃຫ້ເປັນເດືອນທີ່ບໍ່ທຳມະດາເດືອນໜຶ່ງ."

ນັບແຕ່ງານກິລາໂອລິມປິກເປີດຂຶ້ນເປັນຕົ້ນມາ, ສື່ມວນຊົນທີ່ສຳຄັນຂອງເບຼຊິນໄດ້ອອກລາຍການໂອລິມປິກຕະຫຼອດ 24 ຊົ່ວໂມງ, ແຟນກິລາຂອງເບຼຊິນກໍຮີບຄວ້າເອົາເວລາທີ່ມີໂອກາດທັງໝົດນີ້ເພື່ອຊົມການອອກອາກາດການແຂ່ງຂັນກິລາໂອລິມປິກ. ວັນທີ 15 ໃນເວລາທີ່ໃກ້ຈະເຖິງທ່ຽງຄືນຕາມຖະໜົນໃນເມືອງລີໂອເດີຈາເນໂລແລະໃນເຂດຊຸມຊົນໄດ້ເກີດມີສຽງຮ້ອງໂຮມ່ວນຊື່ນແລະສຽງດອກໄມ້ໄຟແຕກຂຶ້ນເປັນໄລຍະໆ, ນັ້ນແມ່ນຄົນທົ່ວໄປພາກັນຊົມເຊີຍໄຊໂລນັກກິລາລອຍນ້ຳເບຼຊິນທີ່ໄດ້ຮັບຫຼຽນຄຳກິລາລອຍນ້ຳຊາຍແບບຟຼີສະຕາຍ 50 ແມັດໃນການແຂ່ງຂັນກິລາໂອລິມປິກປັກກິ່ງຢູ່"ສະໜາມກິລາຮູບກ້ອນນ້ຳ".

ຊາວຈີນທີ່ກວມເອົາ 1 ສ່ວນ 5 ຂອງມວນມະນຸດຊາດແມ່ນເທື່ອທຳອິດທີ່ມີຄວາມສະດວກໃນການໄດ້ຊື່ນຊົມຊົມງານມະຫາກຳມ່ວນຊື່ນອັນຍິ່ງໃຫຍ່ມະໂຫລານເຊັ່ນນີ້.

"ຂໍໃຫ້ຄວາມຝັນເກີດເປັນຈິງຢ່າງບໍ່ມີຂີດຈຳກັດ, ຢູ່ຮ່ວມຄອບຄົວດຽວກັນ, ຢູ່ໃຕ້ທ້ອງຟ້າສີຄາມອັນດຽວກັນ, ເປັນເຊັ່ນນີ້ໄປຊົ່ວນິລັນດອນ."

